*Journal of Science and Teacher Education (JLSTE), 1*(1), 167-177

# ການເສີມສ້າງທັກສະການປັ້ນລາຍກະຈັງຕາອ້ອຍສຳລັບນັກສຶກສາລະດັບປະລິນຍາຕີ ວິທະຍາໄລສິລະປະສຶກສາ ຜ່ານຊຸດການສອນແບບຝຶກເສີມທັກສະ

*ຄຳເພັດ ແສງສຸລີ**

*ວິທະຍາໄລສິລະປະສຶກສາ*

---

**ບົດຄັດຫຍໍ້**

ການຄົ້ນຄວ້ານີ້ມີຈຸດປະສົງເພື່ອ 1) ປະເມີນການພັດທະນາທັກສະການປັ້ນລາຍກະຈັງຕາອ້ອຍຂອງນັກສຶກສາລະດັບປະລິນຍາຕີ ວິທະຍາໄລສິລະປະສຶກສາ ຫຼັງຈາກການນຳໃຊ້ຊຸດການສອນແບບຝຶກເສີມທັກສະ, 2) ສຶກສາຄວາມຄິດເຫັນຂອງນັກສຶກສາລະດັບປະລິນຍາຕີ ວິທະຍາໄລສິລະປະສຶກສາ ຕໍ່ຊຸດການສອນແບບຝຶກເສີມທັກສະ ແລະ ວິທີການສອນທີ່ໃຊ້ໃນການເສີມສ້າງທັກສະການປັ້ນລາຍກະຈັງຕາອ້ອຍ. ກຸ່ມເປົ້າໝາຍໄດ້ແກ່ນັກສຶກສາປີທີ 3 ຈຳນວນ 25 ຄົນ, ຜູ້ຊ່ຽວຊານມະວຸດດ້ານສິລະປະກຳຈຳນວນ 3 ທ່ານ. ເຄື່ອງມືການຄົ້ນຄວ້າປະກອບດ້ວຍແບບສອບຖາມ, ແບບສຳພາດ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄວ້ານີ ຄື: ຄ່າສ່ວນຮ້ອຍ, ຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ. ຜົນການຄົ້ນຄວ້າສະແດງໃຫ້ເຫັນວ່າ ກ່ອນການນຳໃຊ້ຊຸດການສອນແບບຝຶກເສີມທັກສະນັກສຶກສາທີ່ໄດ້ຮັບເກຣດ A ຈຳນວນ 4 ຄົນ ເທົ່າກັບ 16%, ເກຣດ B+ ຈຳນວນ 5 ຄົນ ເທົ່າກັບ 20%, ເກຣດ B ຈຳນວນ 11 ຄົນ ເທົ່າກັບ 44%, ເກຣດ C+ ຈຳນວນ 3 ຄົນ ເທົ່າກັບ 12%, ເກຣດ C ຈຳນວນ 2 ຄົນ ເທົ່າກັບ 8%. ຫຼັງຈາກໄດ້ນຳໃຊ້ຊຸດການສອນແບບຝຶກເສີມທັກສະດັ່ງກ່າວ ພົບວ່າ ນັກສຶກສາທີ່ໄດ້ຮັບເກຣດ A ມີຈຳນວນ 11 ຄົນ ເພີ່ມຂຶ້ນ +8 ຄົນ ເທົ່າກັບ 32%, ເກຣດ B+ ຈຳນວນ 6 ຄົນ ເພີ່ມຂຶ້ນ +1 ຄົນ ເທົ່າກັບ 4%, ເກຣດ B ຫຼຸດລົງ -6 ຄົນ ເທົ່າກັບ 24%, ເກຣດ C+ ຈຳນວນ 2 ຄົນ ຫຼຸດລົງ -1 ເທົ່າກັບ 4% ແລະ ເກຣດ C ຫຼຸດລົງ -2 ຄົນ ເທົ່າກັບ 8%. ຈາກການປະເມີນທັກສະກ່ອນການປັ້ນລາຍກະຈັງຕາອ້ອຍຂອງນັກສຶກສາ ຈຳນວນ 5 ດ້ານ ແມ່ນເທົ່າກັບ 77.32%, ເຊິ່ງແບ່ງເປັນ: ດ້ານຄວາມຖືກຕ້ອງ 71.43%, ດ້ານໂຄງສ້າງລາຍ 79.84%, ດ້ານຫຼັກການຈັດພາບ 82%, ດ້ານເຕັກນິກ 79.51% ແລະ ຫຼັງການປະເມີນທັກສະການປັ້ນລາຍກະຈັງຕາອ້ອຍຂອງນັກສຶກສາພົບວ່າ ຢູ່ໃນລະດັບເພີ່ມຂຶ້ນ ເທົ່າກັບ 87.40% (ຄ່າປ່ຽນແປງ 10.08%), ເຊິ່ງແບ່ງເປັນ: ດ້ານຄວາມຖືກຕ້ອງເພີ່ມຂຶ້ນ 83.77% (ຄ່າປ່ຽນແປງ 12.34%), ດ້ານໂຄງສ້າງລາຍເພີ່ມຂຶ້ນ 88.32% (ຄ່າປ່ຽນແປງ 8.48%), ດ້ານຫຼັກການຈັດພາບ ເພີ່ມຂຶ້ນ 89.09% (ຄ່າປ່ຽນແປງ 11.56%) ແລະ ດ້ານເຕັກນິກ ເພີ່ມຂຶ້ນ 91.11% (ຄ່າປ່ຽນແປງ 11.56%). ສ່ວນຜົນຈາກການສຶກສາຄວາມຄິດເຫັນຂອງນັກສຶກສາ ຕໍ່ການນຳໃຊ້ຊຸດການສອນແບບຝຶກເສີມທັກສະ ແລະ ວິທີການສອນທີ່ໃຊ້ໃນການເສີມສ້າງທັກສະການປັ້ນລາຍກະຈັງຕາອ້ອຍ ຈຳນວນ 5 ດ້ານ ເຫັນວ່າ ຢູ່ໃນລະດັບຄວາມເໝາະສົມຫຼາຍທີ່ສຸດ ($\overline{X}$=4.50, S.D.=0.06).

***ຄຳສຳຄັນ:*** *ລາຍກະຈັງຕາອ້ອຍ, ການປັ້ນ, ການເສີມສ້າງທັກສະ, ຊຸດການສອນ.*

**ຕິດຕໍ່ພົວພັນ: ຄຳເພັດ ແສງສຸລີ; ໂທ: 02022988855; ອີເມວ: khampheth007@gmail.com*

# Enhancing Lai Ka Chang Ta Oi Modeling Skills for Undergraduate Students at Arts Education College Through a Set of Skill-Enhancement Training Manual

*Khamphet Saengsouly**

*Arts Education College*

**Abstract**

This research aims to: (1) evaluate the development of Lai Ka Chang Ta Oi modeling skills among undergraduate students at the Arts Education College after using a Set of Skill-Enhancement Training Manuals, and (2) study the opinions of undergraduate students at the Arts Education College regarding the Set of Skill-Enhancement Training Manuals and the teaching methods used to enhance Lai Ka Chang Ta Oi modeling skills. The study was conducted with 25 third-year students and three experts in sculpture. The research instruments included questionnaires and interviews. The statistical methods used for data analysis were percentages, means, and standard deviations. The results showed that before using the Set of Skill-Enhancement Training Manuals, 4 students received a grade of A (16%), 5 students received a grade of B+ (20%), 11 students received a grade of B (44%), 3 students received a grade of C+ (12%), and 2 students received a grade of C (8%). After using the Set of Skill-Enhancement Training Manuals, 11 students received a grade of A (an increase of 8 students, 32%), 6 students received a grade of B+ (an increase of 1 student, 4%), the number of students receiving a grade of B decreased by 6 (24%), the number of students receiving a grade of C+ decreased by 1 (4%), and the number of students receiving a grade of C decreased by 2 (8%). The pre-evaluation of students' Lai Ka Chang Ta Oi modeling skills across five aspects resulted in an overall score of 77.32%, with accuracy at 71.43%, pattern structure at 79.84%, principles of composition at 82%, and technique at 79.51%. The post-evaluation showed an improvement, with the overall score increasing to 87.40% (a change of 10.08%). Specifically, accuracy increased to 83.77% (a change of 12.34%), pattern structure increased to 88.32% (a change of 8.48%), principles of composition increased to 89.09% (a change of 11.56%), and technique increased to 91.11% (a change of 11.56%). The students' opinions on the Set of Skill-Enhancement Training Manuals and the teaching methods for enhancing Lai Ka Chang Ta Oi modeling skills, based on five aspects, indicated an overall high level of suitability (Mean = 4.50, SD = 0.06).

***Keywords:*** *Lai Ka Chang Ta Oi modelling, sculpturing, skills enhancement, training manual*

## 1. ພາກສະເໜີ

### *1.1. ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ຜ່ານໄລຍະປະຫວັດສາດຂອງຊາດລາວເຮົາໄດ້ຖືກຮຸກຮານຈາກອິດທິກຳລັງສັກດີນາ, ຈັກກະພັດລ່າເມືອງຂຶ້ນຕ່າງດ້າວ ແລະ ພ້ອມກັນນັ້ນສິລະປະລາຍລາວກໍຖືກມ້າງເພທຳລາຍ, ຖືກປຸ້ນສະດົມ, ຖືກມິ່ນປະໝາດ, ຖືກສະກັດກັ້ນບໍ່ໃຫ້ຂະຫຍາຍຕົວ. ແຕ່ດ້ວຍນ້ຳໃຈຮັກຊາດ, ຫວງແຫນມໍລະດົກທາງດ້ານສິລະປະວັດນະທຳອັນປະເສີດຂອງເຊື້ອຊາດລາວ, ຈຶ່ງໄດ້ເສີມຂະຫຍາຍ ແລະ ສາມາດຍືນຍົງຄົງຕົວຢ່າງໝັ້ນຄົງມາເຖິງປັດຈຸບັນນີ້. ເພື່ອຮັກສາມູນມໍລະດົກອັນປະເສີດ ແລະ ລ້ຳຄ່າໃນດ້ານສິລະປະທີ່ເປັນສ່ວນໜຶ່ງສຳຄັນ ອັນເປັນໜ້າທະນົງເອກອ້າງຂອງຊາດລາວໄວ້ໃຫ້ຍືນຍົງຄົງຕົວສືບຕໍ່ໄປຊົ່ວກາລະນານ, ພັກ ແລະ ລັດ ຈຶ່ງໄດ້ຖືເອົາ "ສິລະປະສຶກສາ" ເປັນເນື້ອໃນໜຶ່ງທີ່ສຳຄັນໃນການກໍ່ສ້າງຄົນໃໝ່ໃນສັງຄົມນິຍົມ ທີ່ຂະຫຍາຍຕົວຮອບດ້ານ. ເຊິ່ງ ບຸນສຸກ ທິລະສັກ (2018, ໜ້າ. 2) ໃຫ້ຄຳເຫັນວ່າ ໂດຍປະຕິບັດຕາມແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ແຕ່ປີ 2016 ເຖິງ ປີ 2025 ແລະ ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ໄລຍະ II ໂດຍສະເພາະແມ່ນການປັບປຸງຄຸນນະພາບການສຶກສາ ໃຫ້ໄປຕາມ 3 ລັກສະນະ 5 ຫຼັກມູນ ແລະ 7 ວິທີການປະຕິຮູບການສຶກສາ. ວຽກງານກໍ່ສ້າງຄູສິລະປະສຶກສາແມ່ນວຽກງານໜຶ່ງທີ່ສຳຄັນ ແລະ ຈຳເປັນໃຫ້ແກ່ການພັດທະນາການສຶກສາແຫ່ງຊາດ; ຕໍ່ກັບວຽກງານທີ່ສຳຄັນ ແລະ ຈຳເປັນດັ່ງກ່າວນັ້ນ ກະຊວງສຶກສາທິການ ແລະ ກິລາ ໄດ້ມອບໝາຍໜ້າທີ່ໃຫ້ແກ່ວິທະຍາໄລສິລະປະສຶກສາ ເປັນຜູ້ຮັບຜິດຊອບສ້າງຄູສິລະປະສຶກສາໃຫ້ມີຄວາມຮູ້, ຄວາມສາມາດ ແລະ ຄວາມຊຳນານງານ ເພື່ອນຳໃຊ້ເຂົ້າໃນການຈັດການຮຽນ-ການສອນ ໃນຊັ້ນມັດທະຍົມສຶກສາໃນທົ່ວປະເທດໃຫ້ໄດ້ຮັບຜົນດີ. ບຸນເລີງ ເວິ່ນວິລາວົງ (2021, ສຳພາດ) ຍັງກ່າວອີກວ່າ ຕາມທິດທາງແນວທາງໃໝ່ຂອງພັກປະຊາຊົນປະຕິວັດລາວ, ເພິ່ນໄດ້ຍົກສູງວຽກງານສິລະປະວັດທະນະທຳຂອງຊາດເຮົາທີ່ຈົບງາມນັ້ນ, ໃຫ້ນັບມື້ນັບດີເດັ່ນແວວວາວຂຶ້ນ, ປົກປັກຮັກສາ, ປະຕິສັງຂອນ, ເສີມຂະຫຍາຍມູນເຊື້ອອັນຈົບງາມດັ່ງກ່າວນັ້ນໃຫ້ນັບມື້ນັບກວ້າງຂວາງ ເພື່ອສະແດງໃຫ້ເຫັນເຖິງຊາດລາວ, ທີ່ເປັນເອກະລາດທຸກໆດ້ານ ແລະ ຢັ້ງຢືນເຖິງປະຫວັດສາດແຕ່ລະຍຸກສະໄໝຂອງຊາດລາວເຮົາແຕ່ກ່ອນຈົນເຖິງປັດຈຸບັນ.

ສິລະປະລາຍລາວ ແມ່ນໜຶ່ງໃນສິລະປະລາວທີ່ເປັນເອກະລັກ ແລະ ມີ່ງຂວັນຂອງເຊື້ອຊາດລາວ. ໂດຍໄດ້ກຳເນີດຂຶ້ນມາຫຼາຍສະຕະວັດແລ້ວ ແລະ ໄດ້ວິວັດສືບຕໍ່ເນື່ອງກັນມາຈົນເຖິງປັດຈຸບັນຢ່າງກ້າວໜ້າ, ອຸດົມຮັ່ງມີ, ມີຫຼາຍຮູບຫຼາຍແບບແຕກຕ່າງກັນ ແລະ ມີຢູ່ໃນທຸກເຂດແຂວງໃນທົ່ວປະເທດ ເຊັ່ນ: ລາຍລາວຫຼວງພະບາງ, ລາຍລາວຊຽງຂວາງ, ລາຍລາວວຽງຈັນ, ລາຍລາວຈຳປາສັກ ເຊິ່ງ ບຸນເລີງ ເອີ່ນວິລາວົງ ແລະ ບຸນທ່ຽງ ສິຣິປະພັນ (2021, ສຳພາດ) ໄດ້ໃຫ້ຄຳເຫັນໄວ້ຄືກັນວ່າ ສິລະປະລາຍລາວຂອງພວກເຮົາ ນັບວ່າເປັນສິລະປະທີ່ມີຄວາມສວຍງາມທີ່ສຸດ ເຊິ່ງເປັນມໍລະດົກອັນລ້ຳຄ່າຂອງຊົນຊາດລາວເຮົາ. ເຊິ່ງບັນດາຊາວຊ່າງສິລະປະກຳແຕ່ລະຍຸກສະໄໝໄດ້ສືບທອດ ແລະ ເສີມຂະຫຍາຍຂຶ້ນມາ, ຈຶ່ງເປັນການເອກອ້າງຄວາມສາມາດ, ຄວາມຈະເລີນຮຸ່ງເຮືອງຂອງຍຸກສະໄໝຕ່າງໆຕໍ່ໂລກພາຍນອກໄດ້. ສິລະປະລາຍລາວມັນເປັນສິລະປະທີ່ເຕັມໄປດ້ວຍຊີວິດຈິດໃຈ, ຂະນົບທຳນຽມປະເພນີ ແລະ ວັດທະນະທຳຂອງຊົນຊາດລາວເຮົາແທ້ຢ່າງສົມບູນ ແລະ ບຸນແສງ ທຽບພິງພັນ (2021, ສຳພາດ) ຍັງກ່າວອີກວ່າ ຕົ້ນກຳເນີດພື້ນຖານຂອງສິລະປະລວດລາຍພື້ນເມືອງລາວ ແມ່ນປະດິດມາຈາກດອກໄມ້, ໃບໄມ້, ເຄືອໄມ້, ໝາກໄມ້, ກໍ, ກໍໄຜ່, ແປວໄຟ, ຫາງສັດ, ມະນຸດ, ສັດ ແລະ ທຸກສິ່ງທຸກຢ່າງຈາກທຳມະຊາດ ເປັນຕົ້ນ.




ຮູບປະກອບ 1: ລຳອ້ອຍ ແລະ ຮູບແຕ້ມລາຍກະຈັງຕາອ້ອຍ.
ທີ່ມາ: ທິດຕັນ (ສິລະປະລາຍລາວ ຫຼວງພະບາງ 1, ໜ້າ. 1)

ດັ່ງນັ້ນ, ຜູ້ຄົ້ນຄວ້າເຫັນວ່າ ຜູ້ຮຽນໃນລະດັບປະລິນຍາຕີນີ້ຄວນຈະຕ້ອງມີພື້ນຖານທີ່ມີຄວາມເໝາະສົມກັບຫຼັກວິຊາການປັ້ນໂດຍສະເພາະແມ່ນພື້ນຖານການປັ້ນດ້ວຍດິນໜຽວ. ທັງນີ້, ກໍຈະສາມາດສິ່ງເສີມໃຫ້ຜູ້ຮຽນໄດ້ປະຕິບັດການທີ່ສອດຄ່ອງກັບຫຼັກການ, ວິທີການ, ເຕັກນິກຂອງລາຍວິຊາໄດ້ຢ່າງເໝາະສົມກັບລະດັບຂອງຜູ້ຮຽນ. ຄຽງຄູ່ກັນນັ້ນ, ຍັງເຫັນວ່າການຈັດການຮຽນ-ການສອນໃນວິຊາປັ້ນຍັງຂາດແຫຼ່ງຂໍ້ມູນດ້ານເອກະສານ, ສື່ການສອນ, ຕຳລາທີ່ຈະທົບທວນ ເຊິ່ງຍາກຕໍ່ການກຳນົດມາດຖານ ຫຼື ຫຼັກການໃນລາຍວິຊາປັ້ນລາຍກະຈັງຕາອ້ອຍທີ່ເປັນພື້ນຖານໃນການສຶກສາ ໂດຍຜູ້ຮຽນໃນສາຍວິຊາສິລະປະກຳທຸກຄົນຈະຕ້ອງໄດ້ຜ່ານ ຫຼື ປະຕິບັດສ້າງສັນກ່ອນລວດລາຍອື່ນໆ ຍ້ອນວ່າລາຍກະຈັງຕາອ້ອຍເປັນແມ່ລາຍພື້ນຖານຫຼັກໃນບັນດາລວດລາຍຂອງລາວ. ດັ່ງນັ້ນ, ຊຸດການສອນແບບຝຶກເສີມທັກສະພື້ນຖານການປັ້ນ ຈຶ່ງເປັນເຄື່ອງມືໜຶ່ງທີ່ຈະເປັນສ່ວນຊ່ວຍໃຫ້ວິທີການສອນເປັນລະບົບ, ມີແບບແຜນ, ອາໄສການຝຶກຝົນນັບແຕ່ການຮຽນຮູ້ດ້ວຍຕົນເອງ, ການຮ່ວມກິດຈະກຳກຸ່ມ, ຊ່ວຍປະຢັດເວລາໃນການອະທິບາຍ, ການສາທິດ ແລະ ລຸດຜ່ອນການຊ່ວຍເຫຼືອແນະນຳບົດຮຽນຂອງຄູສອນລົງໄດ້ອີກທາງໜຶ່ງ. ນອກຈາກນັ້ນ, ຍັງເປັນເຄື່ອງມືພັດທະນາຄວາມຮູ້ ແລະ ປູກຝັງຈິດສຳນຶກໃຫ້ນັກສຶກສາໄດ້ນຳຄວາມຮູ້ນັ້ນມາສຶກສາທົບທວນໄດ້ດ້ວຍຕົນເອງ ເພື່ອບໍ່ໃຫ້ລືມຫຼັກການ, ຮູບແບບ ຫຼື ລັກສະນະທີ່ຖືກຕ້ອງຈາກການສຶກສາໃນຂັ້ນຕົ້ນ. ທັງນີ້, ການໃຊ້ສື່ໃນຮູບແບບຕ່າງໆ ໂດຍມີເປົ້າໝາຍຄືການພັດທະນາຊຸດການສອນແບບຝຶກທັກສະທີ່ກົງກັບຄວາມຕ້ອງການຂອງຜູ້ຮຽນນັ້ນ ຈະເຮັດໃຫ້ຜູ້ຮຽນສາມາດສຶກສາຄົ້ນຄວ້າຫາຄວາມຮູ້ດ້ວຍຕົນເອງ. ໂດຍມີຄູເປັນຜູ້ໃຫ້ຄວາມຊ່ວຍເຫຼືອ ແລະ ແນະນຳກ່ຽວກັບຄວາມຮູ້ພື້ນຖານທາງດ້ານການປັ້ນລາຍກະຈັງ ເພາະມີເນື້ອໃນທີ່ນັກສຶກສາຈຳເປັນຕ້ອງຮຽນຮູ້ເພື່ອໃຫ້ນັກສຶກສາໄດ້ນຳຄວາມຮູ້ຈາກການຮຽນຮູ້ໄປໃຊ້ເປັນພື້ນຖານໃນການຮຽນໃນລະດັບທີ່ສູງຂຶ້ນໄປ ແລະ ຍັງເປັນການພັດທະນາຜົນການຮຽນໃນສາຍວິຊາຮຽນໃຫ້ສູງຂຶ້ນໄດ້ອີກດ້ວຍ.

ຕໍ່ເຫດຜົນດັ່ງກ່າວ ຜູ້ຄົ້ນຄວ້າເຫັນໄດ້ເຖິງຄວາມສຳຄັນຈຶ່ງໄດ້ລິເລີ່ມສ້າງຊຸດການສອນແບບຝຶກເສີມທັກສະການປັ້ນລາຍກະຈັງຕາອ້ອຍ ເຊິ່ງໄດ້ຈາກການສຶກສາຄົ້ນຄວ້າ, ຈາກປະສົບການສອນ, ຫຼັກການ, ວິທີການ, ຮູບແບບ ແລະ ລວດລາຍຂອງຄູຊ່າງເຂົ້ານຳກັນ ເພື່ອພັດທະນາທັກສະ, ຄວາມຮູ້, ຄວາມເຂົ້າໃຈຕໍ່ຂະບວນການຮັບຮູ້ທາງສິລະປະການປັ້ນ ໃຫ້ເກີດປະສິດທິຜົນສູງສຸດຕໍ່ຜູ້ຮຽນ ແລະ ເກີດການສຶກສາໃນທິດທາງທີ່ຖືກຕ້ອງເປັນມາດຕະຖານທີ່ສ້າງຄວາມເຂົ້າໃຈໃນແບບດຽວກັນ. ນອກຈາກນັ້ນ, ຍັງເປັນສື່ໃຫ້ຜູ້ສອນນຳໄປໝູນໃຊ້ເຂົ້າໃນກິດຈະກຳການຮຽນ-ການສອນ ແລະ ເປັນພື້ນຖານເບື້ອງຕົ້ນສຳລັບຜູ້ທີ່ເລີ່ມຮຽນໃໝ່ຈຳເປັນຕ້ອງມີສື່ທີ່ຈະຊ່ວຍອະທິບາຍທິດທາງການແກ້ໄຂບັນຫາ, ສຶກສາທົບທວນໃຫ້ເກີດຄວາມຮູ້ຄວາມເຂົ້າໃຈໄດ້ໂດຍງ່າຍຖືກຕ້ອງ ແລະ ຊັດເຈນຕາມຮູບແບບຂອງຊຸດການສອນແບບຝຶກເສີມທັກສະທີ່ໄດ້ຜ່ານການສຶກສາຄົ້ນຄວ້າຢ່າງເປັນລະບົບມາ. ຄຽງຄູ່ກັນນັ້ນ, ກໍຍັງສາມາດນຳໄປເປັນແນວທາງໃນການສ້າງຊຸດການສອນແບບຝຶກປະຕິບັດທີ່ກ່ຽວຂ້ອງກັບການເສີມທັກສະທາງດ້ານສິລະປະອື່ນໆ ທີ່ຈະສົ່ງຜົນໃຫ້ເກີດການຮຽນຮູ້ທີ່ມີປະສິດທິພາບໃນລະດັບທີ່ສູງຂຶ້ນ.

### *1.2. ຄຳຖາມຂອງການຄົ້ນຄວ້າ ?*

1. ທັກສະການປັ້ນລາຍກະຈັງຕາອ້ອຍຂອງນັກສຶກສາລະດັບປະລິນຍາຕີ ວິທະຍາໄລສິລະປະສຶກສາ ຜ່ານການນຳໃຊ້ຊຸດການສອນແບບຝຶກເສີມທັກສະເປັນແນວໃດ?.

2. ຜົນການສຶກສາຄວາມຄິດເຫັນຂອງນັກສຶກສາ ຕໍ່ການໃຊ້ຊຸດການສອນແບບຝຶກເສີມທັກສະ ແລະ ວິທີການສອນການທີ່ໃຊ້ໃນການເສີມສ້າງທັກສະປັ້ນລາຍກະຈັງຕາອ້ອຍຢູ່ໃນລະດັບໃດ?.

### *1.3. ຈຸດປະສົງຂອງການຄົ້ນຄ້ວາ*

1. ເພື່ອປະເມີນການພັດທະນາທັກສະການປັ້ນລາຍກະຈັງຕາອ້ອຍຂອງນັກສຶກສາລະດັບປະລິນຍາຕີ ວິທະຍາໄລສິລະປະສຶກສາ ຫຼັງຈາກການນຳໃຊ້ຊຸດການສອນແບບຝຶກເສີມທັກສະ.

2. ເພື່ອສຶກສາຄວາມຄິດເຫັນຂອງນັກສຶກສາລະດັບປະລິນຍາຕີ ວິທະຍາໄລສິລະປະສຶກສາ ຕໍ່ຊຸດການສອນແບບຝຶກເສີມທັກສະ ແລະ ວິທີການສອນທີ່ໃຊ້ໃນການເສີມສ້າງທັກສະການປັ້ນລາຍກະຈັງຕາອ້ອຍ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ໃນພາກສ່ວນນີ້ເປັນການສັງລວມການທົບທວນບົດຄົ້ນຄວ້າກ່ຽວຂ້ອງກັບການນຳໃຊ້ຊຸດການສອນແບບຝຶກເສີມທັກສະການປັ້ນລາຍກະຈັງຕາອ້ອຍ ໂດຍມີລາຍລະອຽດດັ່ງລຸ່ມນີ້: ວຽງທອນ ທຸມມະຈັນ ພ້ອມຄະນະ (2019) ໄດ້ຄົ້ນຄວ້າເລື່ອງສຶກສາການສ້າງຊຸດການຮຽນ-ການສອນແຕ້ມລາຍລາວດອກກະຈັງຕາອ້ອຍ ສຳລັບນັກສຶກສາລະດັບປະລິນຍາຕີ ປີທີ 1 ທີ່ວິທະຍາໄລສິລະປະສຶກສາ. ຜົນການຄົ້ນຄວ້າ ພົບວ່າ ດ້ານຊຸດການຮຽນ-ການສອນ ແຕ້ມລາຍລາວດອກກະຈັງຕາອ້ອຍມີປະສິດທິພາບ E1/E2 = 76/76.25 ເຊິ່ງສູງກວ່າເກນທີ່ຕັ້ງໄວ້ 75/75, 2) ຜົນຂອງການປຽບທຽບການຮຽນຂອງນັກສຶກສາຕໍ່ກັບການແຕ້ມລາຍດອກກະຈັງຕາອ້ອຍຂອງນັກສຶກສາ ຈຳນວນ 30 ຄົນ ພົບວ່າ ຜົນຂອງຄະແນນກ່ອນຮຽນລວມທັງໝົດໄດ້ 59.2 ຄະແນນ ($\bar{X}$ = 1.79) ແລະ ຫຼັງການຮຽນລວມທັງໝົດ 93.5 ຄະແນນ ($\bar{X}$ = 3.11) ສະຫຼຸບວ່າ ຜົນການຮຽນຫຼັງຮຽນເພີ່ມຂຶ້ນລວມທັງໝົດ 34.3 ຄະແນນ ($\bar{X}$ = 1.14) ແລະ ຈາກຜົນຂອງການສຶກສາຄວາມເພິ່ງພໍໃຈຂອງນັກສຶກສາທີ່ມີຕໍ່ການສ້າງຊຸດການຮຽນ-ການສອນແຕ້ມລາຍລາວດອກກະຈັງຕາອ້ອຍ ຢູ່ໃນລະດັບຄວາມເພິ່ງພໍໃຈຫຼາຍ ($\bar{X}$ = 4.41).

ຄຳສຸກ ໄຊຍະວົງສີ ພ້ອມຄະນະ (2021) ໄດ້ຄົ້ນຄວ້າເລື່ອງການປະເມີນທັກສະກ່ອນ ແລະ ຫຼັງການສອນ ແຕ້ມປະດັບປະດາລາຍດອກກາບຕາອ້ອຍ ນັກຮຽນຫ້ອງ ມ.4/1 ໂຮງຮຽນມັດທະຍົມຕອນຕົ້ນທົ່ງນາມີ ເມືອງປາກກະດິງ ແຂວງບໍລິຄຳໄຊ. ຜົນການຄົ້ນຄວ້າ ພົບວ່າ ທັກສະການແຕ້ມຂອງນັກຮຽນແມ່ນເພີ່ມຂຶ້ນໃນແຕ່ລະດ້ານ ຄື: 1) ດ້ານຖືກຕາມຂະໜາດ ພົບວ່າ ຫຼັງຮຽນປະຕິບັດໄດ້ເພີ່ມຂຶ້ນ ເທົ່າກັບ 73.75% ເຊິ່ງມີຄະແນນຄວາມຕ່າງ ເທົ່າກັບ 26.25%, 2) ດ້ານການຈັດພາບ ພົບວ່າ ຫຼັງຮຽນປະຕິບັດໄດ້ເພີ່ມຂຶ້ນ ເທົ່າກັບ 75.50% ມີຄະແນນຄວາມຕ່າງ ເທົ່າກັບ 27.50%, 3) ດ້ານການບາກລາຍ ພົບວ່າ ຫຼັງຮຽນປະຕິບັດໄດ້ເພີ່ມຂຶ້ນ ເທົ່າກັບ 81.25% ມີຄະແນນຄວາມຕ່າງເທົ່າກັບ 75.00%, 4) ດ້ານການຕັດເສັ້ນ ພົບວ່າ ຫຼັງຮຽນປະຕິບັດໄດ້ເພີ່ມຂຶ້ນ ເທົ່າກັບ 82.50% ມີຄະແນນຄວາມຕ່າງ ເທົ່າກັບ 35.00% ແລະ 5) ດ້ານສີສັນ ພົບວ່າ ຫຼັງຮຽນປະຕິບັດໄດ້ເພີ່ມຂຶ້ນ ເທົ່າກັບ 87.50% ແລະ ມີຄະແນນຄວາມຕ່າງ ເທົ່າກັບ 33.75%.

ວິລະສັກ ຈັນທິລາດ (2022) ສຶກສາຜົນການຮຽນຫຼັງການໃຊ້ຊຸດການສອນແກະສະຫຼັກລາຍພື້ນຖານ (ລາຍກະຈັງຕາອ້ອຍ ແລະ ລາຍກັນດົກ 3ໂຕ) ສຳລັບນັກສຶກສາລະດັບປະລິນຍາຕີ ປີທີ 3 ວິທະຍາໄລສິລະປະສຶກສາ. ຜົນການຄົ້ນຄວ້າ ພົບວ່າ ປະສິດທິພາບຊຸດການສອນລາຍພື້ນຖານ (ກະຈັງຕາອ້ອຍ ແລະ ກັນດົກ 3 ໂຕ) E1/E2 = 77.15/81.30 ສູງກວ່າເກນທີ່ຕັ້ງໄວ້ ຄື: 75/75. ຈາກການປະເມີນຜົນງານລາຍກະຈັງຕາອ້ອຍ ກ່ອນຮຽນມີຄ່າສະເລ່ຍ ($\bar{X}$ = 62.30 ຄະແນນ) ຢູ່ໃນເກຣດ (D+) ໝາຍເຖິງອ່ອນ ແລະ ຫຼັງຮຽນມີຄ່າສະເລ່ຍ ($\bar{X}$ = 77.10 ຄະແນນ) ຢູ່ໃນເກຣດ (B) ໝາຍເຖິງດີ ແລະ ມີຄ່າປ່ຽນແປງເທົ່າກັບ 14.80 ຄະແນນ (P = 14.80%) ໝາຍເຖິງເພີ່ມຂຶ້ນ, ເມື່ອພິຈາລະນາຄ່າປ່ຽນແປງສ່ວນຮ້ອຍ ພົບວ່າ ຄ່າປ່ຽນແປງຫຼາຍທີ່ສຸດເທົ່າກັບ 40 ຄະແນນ (P = 40%) ໝາຍເຖິງເພີ່ມຂຶ້ນ, ຮອງລົງມາມີຄ່າປ່ຽນແປງເທົ່າກັບ 26 ຄະແນນ (P = 26%) ໝາຍເຖິງເພີ່ມຂຶ້ນ ແລະ ຄ່າປ່ຽນແປງໜ້ອຍທີ່ສຸດເທົ່າກັບ 0 ຄະແນນ (P = 0%) ໝາຍເຖິງຄົງທີ່.

ການປະເມີນຜົນງານລາຍກັນດົກ ກ່ອນຮຽນມີຄ່າສະເລ່ຍ ($\bar{X}$ = 64 ຄະແນນ) ຈັດຢູ່ໃນເກຣດ (D+) ໝາຍເຖິງອ່ອນ, ຄະແນນການປະເມີນຜົນງານລາຍກັນດົກ ຫຼັງຮຽນມີຄ່າສະເລ່ຍ ($\bar{X}$ = 81.30 ຄະແນນ) ຈັດຢູ່ໃນເກຣດ (B+) ໝາຍເຖິງ ດີຫຼາຍ ແລະ ມີຄ່າປ່ຽນແປງເທົ່າກັບ 21.30 ຄະແນນ ໝາຍເຖິງເພີ່ມຂຶ້ນ, ເມື່ອພິຈາລະນາຄ່າປ່ຽນແປງສ່ວນຮ້ອຍ ພົບວ່າ ຄ່າປ່ຽນແປງຫຼາຍທີ່ສຸດເທົ່າກັບ 34 ຄະແນນ (P = 34%) ໝາຍເຖິງເພີ່ມຂຶ້ນ, ຮອງລົງມາມີຄ່າປ່ຽນແປງເທົ່າກັບ 30 ຄະແນນ (P = 30%) ໝາຍເຖິງເພີ່ມຂຶ້ນ ແລະ ຄ່າປ່ຽນແປງໜ້ອຍທີ່ສຸດເທົ່າກັບ 0 ຄະແນນ (P = 0%) ໝາຍເຖິງຄົງທີ່.

ວິສິດ ຈິງແຈ່ມ (2552) ໄດ້ຄົ້ນຄວ້າເລື່ອງ ການພັດທະນາຊຸດຝຶກທັກສະການແຕ້ມລອດລາຍໄທພື້ນຖານ ສຳລັບນັກຮຽນລະດັບຊັ້ນ ມ.4. ຜົນການຄົ້ນຄວ້າ ພົບວ່າ 1) ຊຸດຝຶກທັກສະການການແຕ້ມລອດລາຍໄທພື້ນຖານສອນສຳລັບນັກຮຽນລະດັບຊັ້ນ ມ.4 ທີ່ສ້າງຂຶ້ນມີປະສິດທິພາບຕາມເກນທີ່ກຳນົດ ຄື: 77.78/74.56 ເຊິ່ງສູງກວ່າເກນທີ່ຕັ້ງໄວ້, 2). ຜົນສຳເລັດທາງການຂອງນັກຮຽນກ່ອນ ແລະ ຫຼັງຮຽນດ້ວຍຊຸດຝຶກທັກສະການແຕ້ມລາຍໄທພື້ນຖານ ໂດຍຜົນສຳເລັດກ່ອນຮຽນມີຄ່າສະເລ່ຍ ( $\bar{X}$ =13.40) ແລະ ຜົນສຳເລັດຫຼັງການຮຽນມີຄ່າສະເລ່ຍ ( $\bar{X}$ =22.37) ແລະ ຄ່າ T-test ເທົ່າກັບ 10.10. ເຊິ່ງສະແດງໃຫ້ເຫັນວ່າ ນັກຮຽນມີຜົນສຳເລັດຫຼັງຮຽນສູງກວ່າກ່ອນຮຽນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.05 ເຊິ່ງເປັນໄປຕາມເກນທີ່ຕັ້ງໄວ້, 3) ຄວາມເພິ່ງພໍໃຈຕໍ່ການຮຽນຊຸດຝຶກທັກສະການແຕ້ມລາຍໄທພື້ນຖານ ໃນພາບລວມຢູ່ໃນລະດັບດີຫຼາຍທີ່ສຸດ ມີຄ່າສະເລ່ຍ ( $\bar{X}$ =4.53, S.D.=0.12) ແລະ 4) ຜົນຈາກການສຶກສາຊຸດຝຶກທັກສະການແຕ້ມລາຍໄທພື້ນຖານ ພົບວ່າ ນັກຮຽນມີຄ່າຄວາມຄົງທົນ (Retention test) ໃນການຈື່ຈຳທາງດ້ານທັກສະທີ່ຮຽນ ເຊິ່ງຜົນສຳເລັດກ່ອນຮຽນມີຄ່າສະເລ່ຍ ( $\bar{X}$ =22.37).

ປະສິດ ເອມທິມ (2551) ໄດ້ຄົ້ນຄວ້າເລື່ອງ ຜົນການໃຊ້ບົດຮຽນວິດີທັດທີ່ເນັ້ນການຝຶກທັກສະປະຕິບັດ ເລື່ອງການປັ້ນລອດລາຍໄທ ວິຊາທັດສະນະສິນ ກຸ່ມການຮຽນຮູ້ສິລະປະສຳລັບນັກຮຽນຊັ້ນ ປີທີ 3. ຜົນການຄົ້ນຄວ້າ ພົບວ່າ 1) ໄດ້ບົດຮຽນວິດີທັດທີ່ເນັ້ນການຝຶກທັກສະປະຕິບັດ ເລື່ອງການປັ້ນລອດລາຍໄທທີ່ມີຄຸນນະພາບດ້ານເນື້ອໃນຢູ່ໃນລະດັບດີຫຼາຍ ແລະ ມີຄຸນນະພາບດ້ານເຕັກໂນໂລຊີຢູ່ໃນລະດັບດີ ແລະ ມີປະສິດທິພາບ

86.23/87.33. 2) ນັກຮຽນທີ່ຮຽນຈາກບົດຮຽນວິດີທັດ ເລື່ອງການປັ້ນລວດລາຍໄທກັບການຮຽນຕາມແຜນການຈັດການຮຽນຂອງຄູ ມີຜົນທັກສະການປະຕິບັດການປັ້ນລວດລາຍໄທແຕກຕ່າງກັນເຊິ່ງມີໄນສຳຄັນທາງສະຖິຕິທີ່ລະດັບ 0.05. 3) ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດຕໍ່ການຮຽນຈາກບົດຮຽນວິດີທັດປະຕິບັດ ເລື່ອງການປັ້ນລວດລາຍໄທ.

ທັດຖະບໍດິນ ບູນເນື່ອງ (2560) ໄດ້ຄົ້ນຄວ້າເລື່ອງ ການພັດທະນາແບບຝຶກການແຕ້ມລວດລາຍກັນດົກ ສຳລັບນັກສຶກສາສິລະປະລະດັບປະລິນຍາຕີ. ຜົນການຄົ້ນຄວ້າ ພົບວ່າ 1) ຜູ້ຮຽນພົບບັນຫາດ້ານທັກສະ ແລະ ຄວາມເຂົ້າໃຈໃນລາຍລະອຽດ ແລະສັດສ່ວນຂອງລາຍເປັນຈຳນວນຫຼາຍ. 2) ການພັດທະນາແບບຝຶກການແຕ້ມລວດລາຍກັນດົກ ຈາກຂໍ້ສະເໜີແນະຂອງຜູ້ຊ່ຽວຊານດ້ານການສອນ ແລະ ຜະລິດສື່ການສອນ ມີເນື້ອໃນດ້ານລາຍລະອຽດເປັນໄປຕາມລະດັບຂັ້ນຕອນ, ອະທິບາຍຂັ້ນຕອນການແຕ້ມ, ໂຄງສ້າງ, ອົງປະກອບຍ່ອຍ ແລະ ສັດສ່ວນຂອງລວດລາຍກັນດົກໄດ້ຊັດເຈນ. ໂດຍສະແດງຂັ້ນຕອນການແຕ້ມທີ່ສອດຄ່ອງຕໍ່ເນື່ອງກັນ, ງ່າຍຕໍ່ຄວາມເຂົ້າໃຈ ແລະ ສາມາດຝຶກທົບທວນໄດ້ດ້ວຍຕົນເອງໄດ້. 3) ການປະເມີນຂອງຜູ້ຊ່ຽວຊານດ້ານການສອນ ແລະ ຜົດລິດສື່ການສອນ ໃຫ້ຄວາມເຫັນໃນລະດັບຫຼາຍທີ່ສຸດໃນດ້ານຄຸນລັກສະນະແບບຝຶກທີ່ດີ ແລະ ດ້ານເນື້ອໃນການຮຽນ ແລະ ໂຄງສ້າງແບບຝຶກທີ່ດີ.

ຈາກການສຶກສາງານຄົ້ນຄວ້າທີ່ກ່ຽວຂ້ອງນີ້ ມີສ່ວນເຮັດໃຫ້ເກີດຄວາມເຂົ້າໃຈໃນການເຮັດການຄົ້ນຄວ້າທີ່ກ່ຽວຂ້ອງກັບການສ້າງຊຸດການສອນແບບຝຶກເສີມທັກສະການປັ້ນລາຍກະຈັງຕາອ້ອຍ ສຳລັບນັກສຶກສາລະດັບປະລິນຍາຕີ ວິທະຍາໄລສິລະປະສຶກສາ ໂດຍນຳເອົາວິທີການດຳເນີນການຄົ້ນຄວ້າ, ຮູບແບບ, ເຄື່ອງມື ຫຼື ແນວທາງຂອງການຄົ້ນຄວ້າດັ່ງກ່າວນັ້ນມາປັບໃຊ້ໃນການສຶກສາຄັ້ງນີ້.

## 3. ວິທີດຳເນີນການຄົ້ນຄວ້າ

ການຄົ້ນຄວ້າວິໄຈນີ້ໃຊ້ວິທີການແບບປະສົມປະສານຜ່ານການອອກແບບການວິໄຈໂດຍການລວບລວມ ແລະ ວິເຄາະຂໍ້ມູນປະລິມານ ແລະ ຄຸນນະພາບ.

### *3.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ປະຊາກອນທີ່ສຶກສາແມ່ນນັກສຶກສາລະດັບປະລິນຍາຕີ ປີທີ 3 ວິທະຍາໄລສິລະປະສຶກສາ ເຊິ່ງມີຈຳນວນທັງໝົດ 54 ຄົນ. ໃນນັ້ນກຳນົດກຸ່ມເປົ້າໝາຍສຶກສາແບບເຈາະຈົງ ຈຳນວນ 25 ຄົນ ແລະ ຜູ້ຊົງຄຸນນະວຸດດ້ານສິລະປະກຳ ຈຳນວນ 3 ທ່ານ.

### *3.2 ເຄື່ອງມືທີ່ໃຊ້ໃນການເກັບກຳຂໍ້ມູນ*

ສຶກສາຂໍ້ມູນເບື້ອງຕົ້ນຈາກເອກະສານ, ໜັງສື, ຕຳລາ ແລະ ງານຄົ້ນຄວ້າທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ເພື່ອເປັນທິດທາງໃນການດຳເນີນການສ້າງເຄື່ອງມືໃນເກັບກຳຂໍ້ມູນຕາມຈຸດປະສົງຂອງການຄົ້ນຄວ້າ ເຊິ່ງປະກອບດ້ວຍ: (1) ຊຸດການສອນແບບຝຶກທັກສະ ປະກອບມີຊຸດກິດຈະກຳ 3 ແບບ ຄື: 1) ຊຸດກິດຈະກຳປູພື້ນຖານ: ໃຫ້ຜູ້ຮຽນໄດ້ຮຽນຮູ້ຄວາມຮູ້ເບື້ອງຕົ້ນກ່ຽວກັບການປັ້ນ ແລະ ການແນະນຳການໃຊ້ເຄື່ອງມືການປັ້ນລາຍ, 2) ຊຸດການຝຶກແຕ້ມລາຍກະຈັງຕາອ້ອຍ: ຜູ້ຮຽນຈະໄດ້ຮຽນຮູ້ປະຫວັດສິລະປະລາຍລາວໂດຍຫຍໍ້ ແລະ ການຝຶກແຕ້ມລາຍ ເພື່ອໃຫ້ເຫັນດ້ານມິຕິ ຕາມຮູບຊົງຂອງລວດລາຍທີ່ກຳນົດລົງໃສ່ຊຸດການຝຶກແຕ້ມຕາມຄຳສັ່ງຂອງຜູ້ຄົ້ນຄວ້າ, 3) ຊຸດການຝຶກເສີມທັກສະການປັ້ນດິນໜຽວ ແລະ ລວດລາຍ: ໂດຍຜູ້ຮຽນທົດລອງປັ້ນສ່ວນຕ່າງໆຂອງລາຍຕາມຊຸດແບບຝຶກປະຕິບັດຂອງຜູ້ວິໄຈ ເຊັ່ນ: ການປັ້ນຮູບຊົງໜ່ວຍມົນກົມ, ຮູບຊົງແປ, ຮູບຊົງກີບດອກບົວ, ດອກລາຍ, ດອກຊ້ອນ ແລະ ປັ້ນໄສ້ລາຍເປັນຕົ້ນ. ເຊິ່ງນັກສຶກສາສາມາດປັ້ນລາຍໄດ້ຕາມລັກສະນະ ແລະ ເນື້ອໃນທີ່ປັ້ນຕາມຮູບແບບທີ່ໄດ້ກຳນົດໄວ້ ຫຼື ເສີມແຕ່ງເພີ່ມຕື່ມໄດ້. (2) ແບບປະເມີນທັກສະທາງສິລະປະການປັ້ນ ຈຳນວນ 4 ດ້ານ ຄື: ດ້ານຄວາມຖືກຕ້ອງ, ດ້ານໂຄງສ້າງລາຍ, ດ້ານຫຼັກການຈັດພາບ, ດ້ານເຕັກນິກ ໃຊ້ເປັນຂໍ້ມູນການປະເມີນທັກສະກ່ອນ ແລະ ຫຼັງການປັ້ນລາຍກະຈັງຕາອ້ອຍ ຈາກກຸ່ມຕົວຢ່າງ ຈຳນວນ 25 ຄົນ. (3) ແບບສຳພາດຜູ້ຊົງຄຸນນະວຸດດ້ານສິລະປະກຳ ໃຊ້ຮອບຮອມຄວາມຄິດເຫັນຂອງຜູ້ຊົງຄຸນນະວຸດດ້ານສິລະປະກຳ ຈຳນວນ 3 ທ່ານ ມີ 2 ຕອນ ຄື: 1) ຂໍ້ມູນທົ່ວໄປຂອງຜູ້ຕອບແບບສຳພາດ ໂດຍມີຄຳຖາມກ່ຽວກັບເພດ, ໄວ, ສາຂາທີ່ຈົບ, ປະສົບການສອນ, ປະສົບການສ້າງສັນງານສິລະປະ 2) ເປັນຄວາມຄິດເຫັນກ່ຽວກັບຄວາມໝາຍ ແລະ ລັກສະນະຂອງລາຍກະຈັງ, ຄວາມສຳຄັນຂອງສິລະປະການປັ້ນຕໍ່ສິລະປະກຳລາວ ແລະ ຄຸນຄ່າຂອງສິລະປະການປັ້ນ ຈຳນວນ 17 ຂໍ້ ແລະ ຄຳສະເໜີແນະເພີ່ມຕື່ມ. ເພື່ອນຳເອົາຜົນດັ່ງກ່າວມາເປັນຂໍ້ມູນພື້ນຖານປະກອບກັບເນື້ອໃນທິດສະດີທີ່ກ່ຽວຂ້ອງ ແລະ ອະພິປາຍຜົນການຄົ້ນຄວ້າ. (4) ແບບສອບຖາມເພື່ອໃຊ້ສຶກສາຄວາມຄິດເຫັນຂອງນັກສຶກສາ ຈຳນວນ 5 ດ້ານ (30 ຕົວຊີ້ວັດ) ໄດ້ແກ່: ດ້ານຄູສອນ, ດ້ານຈຸດປະສົງຂອງຊຸດແບບຝຶກເສີມທັກສະ, ດ້ານເນື້ອໃນຂອງຊຸດການສອນແບບຝຶກເສີມທັກສະ, ດ້ານສື່ ແລະ ອຸປະກອນ, ດ້ານການວັດ ແລະປະເມີນຜົນ ຈາກກຸ່ມຕົວຢ່າງ ຈຳນວນ 25 ຄົນ. ເຊິ່ງເຄື່ອງມືນີ້ໄດ້ຜ່ານການພິຈາລະນາຄວາມສອດຄ່ອງຂອງຜູ້ຊ່ຽວຊານ ຈຳນວນ 3 ທ່ານ ໂດຍມີຄ່າສະເລ່ຍຄວາມສອດຄ່ອງ (IOC) ເທົ່າກັບ 1.00 ເຊິ່ງສູງກວ່າ 0.05 ແລະ ໄດ້ແກ້ໄຂປະເດັນທີ່ຜູ້ຊ່ຽວຊານໃຫ້ຄຳແນະນຳ.

### *3.3 ວິທີເກັບກຳຂໍ້ມູນ*

ການດຳເນີນການຄົ້ນຄວ້າ ເຊິ່ງຕ້ອງການຂໍ້ມູນດ້ານປະລິມານ ແລະ ຄຸນນະພາບ ໂດຍກຳນົດການເກັບຂໍ້ມູນ 3 ວິທີ ຄື: 1) ແບບປະເມີນທັກສະ: ໃຊ້ເກັບກຳຂໍ້ມູນເພື່ອປະເມີນທັກສະທາງສິລະປະກ່ອນ ແລະ ຫຼັງການປັ້ນລາຍກະຈັງຕາອ້ອຍ ຂອງນັກສຶກສາ ດຳເນີນການໃນ 3 ອາທິດ (ເລີ່ມວັນທີ 1-19 ກຸມພາ 2021), ອາທິດລະ 3 ຊົ່ວໂມງ ເທົ່າກັບ 9 ຊົ່ວໂມງ. 2) ການສຳພາດ: ແມ່ນຕ້ອງການຄວາມຄິດເຫັນຂອງຜູ້ຊົງຄຸນນະວຸດດ້ານສິລະປະກຳ 3 ທ່ານ (ເລີ່ມວັນທີ 12 ເມສາ ຫາ 12 ກໍລະກົດ 2021) ເພື່ອນຳຜົນດັ່ງກ່າວມາເປັນຂໍ້ມູນພື້ນຖານມາສະໜັບສະໜູ

ນກັບເນື້ອໃນທິດສະດີທີ່ກ່ຽວຂ້ອງ ແລະ ອະພິປາຍຜົນຂອງການຄົ້ນຄວ້າ ແລະ 3) ແບບສອບຖາມ: ແມ່ນໃຊ້ສອບຖາມຄວາມຄິດເຫັນຂອງນັກສຶກສາ ຕໍ່ຊຸດການສອນແບບຝຶກເສີມທັກສະ ແລະ ວິທີການສອນທີ່ໃຊ້ໃນການເສີມສ້າງທັກສະການປັ້ນລາຍກະຈັງຕາອ້ອຍ (ດຳເນີນການໃນວັນທີ 22 ກຸມພາ 2021).

*3.4 ການວິເຄາະຂໍ້ມູນ ແລະ ສະຖິຕິທີ່ໃຊ້ໃນການຄົ້ນຄ້ວາ*

ຄ່າລະດັບຄະແນນການປະເມີນທັກສະຂອງນັກສຶກສາ ແມ່ນອີງໃສ່ຫຼັກເກນຂອງລາຍວິຊາ ໃຊ້ແບບ (Rubrics) ກະຊວງສຶກສາທິການ ແລະ ກິລາ (2014)

1) ດ້ານຄວາມຖືກຕ້ອງ: ແບບລາຍ, ຂະໜາດ, ສັດສ່ວນການຈັດອົງປະກອບ, ຄວາມສົມບູນຂອງລາຍ, ຄວາມຮຽບຮ້ອຍ ແລະ ສວຍງາມ (35 ຄະແນນ);
2) ດ້ານໂຄງສ້າງລາຍ: ຮູບຊົງ, ສັດສ່ວນ, ເສັ້ນ, ດອກ, ກາບ, ການສອດໄສ້ລາຍ ແລະ ການບາກລາຍມີຄວາມເໝາະສົມ (25 ຄະແນນ);
3) ດ້ານຫຼັກການຈັດພາບ: ໂຄງຮ່າງລາຍ ແລະ ຄວາມສົມດູນດ້ານຫຼັກການປັ້ນ (22 ຄະແນນ);
4) ດ້ານເຕັກນິກ: ເອກະລັກ ແລະ ຄວາມຄິດສ້າງສັນ (18 ຄະແນນ).

ລວມທັງໝົດ 100 ຄະແນນ.

- ເກນການຈັດລະດັບກຸ່ມຂອງເກຣດ (ອີງໃສ່ເກນມາດຖານປະເມີນຜົນການຮຽນ ຂອງຫຼັກສູດສ້າງຄູມັດທະຍົມສຶກສາລະດັບປະລິນຍາຕີ ວິທະຍາໄລສິລະປະສຶກສາ. 2019, ສະບັບປັບປຸງ).

| | | | | |
|---|---|---|---|---|
| ລະດັບຄະແນນ | 85-100 | ໝາຍເຖິງ | A | ດີເລີດ |
| ລະດັບຄະແນນ | 80-84 | ໝາຍເຖິງ | B+ | ດີຫຼາຍ |
| ລະດັບຄະແນນ | 75-79 | ໝາຍເຖິງ | B | ດີ |
| ລະດັບຄະແນນ | 70-74 | ໝາຍເຖິງ | C+ | ປານກາງ |
| ລະດັບຄະແນນ | 65-69 | ໝາຍເຖິງ | C | ພໍໃຊ້ |

- ການວິເຄາະຂໍ້ມູນກ່ຽວກັບການຫາຄ່າສ່ວນຮ້ອຍ (p)

$$P = \frac{f\ x\ 100}{N}$$

p ແທນຄ່າສ່ວນຮ້ອຍ (%)

f ແທນຄວາມຖີ່

n ແທນຈຳນວນຄົນໃນກຸ່ມ

- ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ ກ່ຽວກັບການຫາຄ່າສະເລ່ຍ (Mean) ໂດຍໃຊ້ສູດ ຊູສີ ວົງລັດຕະນະ, 2560. (ອ້າງເຖິງໃນ ສີຈ່ອຍ ຍາດວິເກດ ພ້ອມຄະນະ, 2018, ໜ້າ. 23)

$$\overline{X} = \frac{\sum X}{N}$$

ໂດຍ $\overline{X}$ ແທນ ຄ່າສະເລ່ຍຄວາມຄິດເຫັນ

$\sum X$ ແທນ ຜົນລວມຂອງແບບສອບຖາມ

$N$ ແທນ ຈຳນວນຄົນໃນກຸ່ມ

- ຄ່າຜັນປ່ຽນມາດຕະຖານ (Standard Deviation)

$$\mathrm{S.D.} = \sqrt{\frac{n\sum fX^2-(\sum fX)^2}{n(n-1)}}$$

ເມື່ອ S.D. ແທນສ່ວນຜັນປ່ຽນມາດຕະຖານ

n ແທນຈຳນວນກຸ່ມຜູ້ໃຫ້ຂໍ້ມູນທັງໝົດ

x ແທນຈຳນວນຂໍ້ມູນທັງໝົດ

f ແທນຄວາມຖີ່

- ການຫາຄ່າຄຸນນະພາບຂອງເຄື່ອງມືທີ່ໃຊ້ໃນການວິໄຈຈາກສູດ:

$$IOC = \frac{\sum X}{N}$$

ເມື່ອ IOC ແທນຄ່າຄວາມເໝາະສົມລະຫວ່າງຂໍ້ຄຳຖາມກັບຈຸດປະສົງ

$\sum X$ ແທນຜົນລວມຂອງຄະແນນພິຈາລະນາຂອງຜູ້ຊ່ຽວຊານ

$N$ ແທນຈຳນວນຂອງຜູ້ຊ່ຽວຊານ

- ເກນຄະແນນສຶກສາຄວາມຄິດເຫັນ

5 ຄະແນນ ໝາຍເຖິງ ຄວາມເໝາະສົມຫຼາຍທີ່ສຸດ

4 ຄະແນນ ໝາຍເຖິງ ຄວາມເໝາະສົມຫຼາຍ

3 ຄະແນນ ໝາຍເຖິງ ຄວາມເໝາະສົມປານກາງ

2 ຄະແນນ ໝາຍເຖິງ ຄວາມເໝາະສົມໜ້ອຍ

1 ຄະແນນ ໝາຍເຖິງ ຄວາມເໝາະສົມໜ້ອຍສຸດ

- ເກນຄ່າສະເລ່ຍການແປຜົນ

4.50-5.00 ໝາຍເຖິງ ຄວາມເໝາະສົມຫຼາຍທີ່ສຸດ

3.50-4.49 ໝາຍເຖິງ ຄວາມເໝາະສົມຫຼາຍ

2.50-3.49 ໝາຍເຖິງ ຄວາມເໝາະສົມປານກາງ

1.50-2.49 ໝາຍເຖິງ ຄວາມເໝາະສົມໜ້ອຍ

1.00-1.49 ໝາຍເຖິງ ຄວາມເໝາະສົມໜ້ອຍທີ່ສຸດ

## 4. ຜົນການຄົ້ນຄວ້າ

ຈາກການໃຊ້ຊຸດການສອນແບບຝຶກເສີມທັກສະການປັ້ນລາຍກະຈັງຕາອ້ອຍ ສຳລັບນັກສຶກສາລະດັບປະລິນຍາຕີ ຈຳນວນ **25** ຄົນ ໄດ້ນຳຫຼັກເກນການປະເມີນຜົນງານທັງ **4** ດ້ານທັກສະທາງສິລະປະການປັ້ນລາຍ ພົບວ່າ ຜົນຫຼັງການຮຽນ-ການສອນນັກສຶກສາສາມາດພັດທະນາດ້ານທັກສະຢູ່ໃນລະດັບທີ່ເພີ່ມຂຶ້ນເທົ່າກັບ 87.40% ມີຄ່າປ່ຽນແປງເທົ່າກັບ 10.08% ເຊິ່ງສາມາດສະຫຼຸບຜົນເປັນລາຍດ້ານ ດັ່ງນີ້:

1. ດ້ານຄວາມຖືກຕ້ອງ ພົບວ່າ ຫຼັງການສອນນັກສຶກສາມີຄະແນນທັກສະແມ່ນເພີ່ມຂຶ້ນ ເທົ່າກັບ 83.77% ມີຄ່າການ

ປ່ຽນແປງເທົ່າກັບ 12.34% ໂດຍນັກສຶກສາສ່ວນໃຫຍ່ມີຄວາມເຂົ້າໃຈ ແລະ ສາມາດປະຕິບັດໄດ້ຕາມຫຼັກການ, ຂັ້ນຕອນ ແລະ ວິທີທາງການປັ້ນລາຍກະຈັງຕາອ້ອຍ ເຊິ່ງສະແດງອອກໃນດ້ານຄວາມຖືກຕ້ອງຕາມແບບລາຍກະຈັງຕາອ້ອຍຕາມຊຸດການສອນແບບຝຶກເສີມທັກສະ ຈຶ່ງເຮັດໃຫ້ຜົນງານທີ່ສ້າງສັນອອກມາມີຄວາມເໝາະສົມຖືກຕ້ອງກັບຂະໜາດ, ສັດສ່ວນໂຄງສ້າງຂອງລາຍ, ການເນັ້ນລະດັບຊັ້ນຄວາມສູງ-ຕ່ຳ, ຄວາມເລິກ-ໜາລະຫວ່າງດອກລາຍ, ກາບບາກ, ຍອດລາຍ, ດອກຊ້ອນ ແລະ ການສອດໄສ້ລາຍ ໄດ້ຕາມລັກສະນະຂອງການປັ້ນແບບນູນສູງບວກກັບການຈັດສັດສ່ວນຂອງລະດັບພື້ນທີ່ລາຍທີ່ກຳນົດມີຄວາມເໝາະສົມພໍດີ ເຮັດໃຫ້ມີຄວາມສົມບູນດ້ານເນື້ອໃນຂອງອົງປະກອບ ແລະ ມີຄວາມອ່ອນຊ້ອຍງົດງາມ.

2. ດ້ານໂຄງສ້າງລາຍ ພົບວ່າ ຫຼັງການສອນນັກສຶກສາມີຄະແນນທັກສະເພີ່ມຂຶ້ນ ເທົ່າກັບ 88.32% ມີຄ່າການປ່ຽນແປງເທົ່າກັບ 8.48%. ເຊິ່ງນັກສຶກສາສ່ວນໃຫຍ່ມີຄວາມເຂົ້າໃຈໃນດ້ານ ໂຄງສ້າງພື້ນຖານຂອງການປັ້ນລາຍກະຈັງຕາອ້ອຍ ໂດຍສາມາດຈັດແບ່ງອັດຕາສ່ວນ ແລະ ສັດສ່ວນທີ່ເໝາະສົມພໍດີໃນລາຍລະອຽດຂອງສ່ວນປະກອບລາຍ, ມີການເນັ້ນຄວາມເລິກ-ຕື້ນ, ຄວາມສູງ-ຕ່ຳ ເພື່ອໃຫ້ເກີດມິມິຕິແຕ່ລະລະດັບຊັ້ນຕາມແບບຂອງຮູບນູນສູງ ແລະ ໃສ່ໃຈໃນລາຍລະອຽດ ໄດ້ແກ່: ຂະໜາດ, ຮູບຊົງ, ດອກລາຍ, ກາບບາກ, ໄສ້ລາຍ, ການແຕ້ມແຕ່ງເສັ້ນລາຍ, ການຈ້ຳດອກດວງ, ການເວັ້ນຊ່ອງໄຟ, ການບາກລາຍ (ໂດຍສ່ວນໃຫຍ່ແມ່ນໃຊ້ການບາກລາຍແບບຂະໜ່ອງສິງ ເຊິ່ງເປັນແບບທີ່ນິຍົມໃຊ້ກັນຫຼາຍໃນງານປັ້ນ, ແກະສະຫຼັກ, ຈິດຕະກຳ...) ເຮັດໃຫ້ຮູບຊົງຂອງເສັ້ນລາຍເກີດຄຸນຄ່າທາງດ້ານຄວາມສວຍງາມ, ມີຄວາມອ່ອນຊ້ອຍ, ໄດ້ສັດສ່ວນ ແລະ ມີຄວາມສົມດູນກັບໂຄງສ້າງລາຍທັງດ້ານຊ້າຍ ແລະ ດ້ານຂວາ ໄດ້ຄົບຖືກຕ້ອງ ຈຶ່ງເຮັດໃຫ້ຜົນງານທີ່ສ້າງສັນອອກມາມີຄວາມເໝາະສົມພໍດີ ເບິ່ງແລ້ວມີຄວາມລົງຕົວໃນຜົນງານ ແລະ ງົດງາມ.

3. ດ້ານຫຼັກການຈັດພາບ ພົບວ່າ ຫຼັງການສອນນັກສຶກສາມີຄະແນນທັກສະເພີ່ມຂຶ້ນ ເທົ່າກັບ 89.09% ມີຄ່າການປ່ຽນແປງເທົ່າກັບ 11.56%. ໂດຍນັກສຶກສາສາມາດຈັດແບ່ງຊ່ອງໄຟ ຫຼື ພື້ນທີ່ຂອງລາຍໄດ້ຕາມອັດຕາສ່ວນເໝາະສົມພໍດີ, ບໍ່ໃຫຍ່, ບໍ່ນ້ອຍ ແລະ ບໍ່ຫຼາຍ ຫຼື ບໍ່ໜ້ອຍຈົນເກີນໄປ ເປັນຕົ້ນແມ່ນການກຳນົດຂອບເຂດໄລຍະຄວາມສູງ-ຕ່ຳ, ຄວາມເລິກ ຫຼື ໜາຂອງພື້ນທີ່ລາຍແຕ່ລະຊັ້ນ ໄດ້ແກ່: ດອກລາຍ, ກາບບາກ, ຍອດລາຍ, ດອກຊ້ອນ, ໄສ້ລາຍໄດ້ຢ່າງເໝາະສົມ ແລະ ຍັງສາມາດເຮັດໜ້າທີ່ຊ່ວຍທຽບຄຽງການກຳນົດພື້ນທີ່ຂອງລາຍກັບພື້ນຮອງຮັບທີ່ຍື່ນອອກ ແລະ ຫຼຸດລົ່ນກັນລົງມາ ເພື່ອສົ່ງເສີມທາງມິຕິຕ່າງໆຕາມການຈັດອົງປະກອບທາງການປັ້ນໄດ້ຢ່າງສຳພັນກັນ ຈຶ່ງເຮັດໃຫ້ຜົນງານທີ່ສ້າງສັນອອກມາເກີດມີຄວາມງາມທີ່ສົມບູນ ແລະ ເປັນພື້ນຖານທີ່ຖືກຕ້ອງຂອງການປັ້ນລາຍກະຈັງຕາອ້ອຍໄດ້ໃນຕໍ່ໜ້າ.

4. ດ້ານເຕັກນິກ ພົບວ່າ ຫຼັງການສອນນັກສຶກສາມີຄະແນນທັກສະເພີ່ມຂຶ້ນ ເທົ່າກັບ 91.11% ໂດຍມີຄ່າການປ່ຽນແປງເທົ່າກັບ 11.56%. ເຊິ່ງນັກສຶກສາສ່ວນໃຫຍ່ແມ່ນສາມາດສ້າງສັນຜົນງານໄດ້ຖືກຕ້ອງຕາມຂະບວນການຂອງການປັ້ນລາຍກະຈັງຕາອ້ອຍ ໂດຍໃຊ້ວິທີການປັ້ນແຕ່ລະສ່ວນປະກອບຂອງລາຍຈົນໄປສູ່ວິທີປະຕິບັດດ້ວຍການຕິດ ຫຼື ການເຊື່ອມເນື້ອດິນເຂົ້າຫາກັນໃຫ້ມີຄວາມແໜ້ນໜາ ແລະ ເກີດເປັນຜົນງານທີ່ສົມບູນຕາມທັກສະສະເພາະທາງຫຼັກວິຊາ. ນອກຈາກນັ້ນ, ກໍຍັງສາມາດເລືອກໃຊ້ເຄື່ອງມືປັ້ນເຂົ້າຊ່ວຍໃນການຕົກແຕ່ງລາຍລະອຽດຕ່າງໆ ເຊິ່ງສາມາດສ້າງເປັນຈຸດສົນໃຈໄດ້ຢ່າງກົມກືນພໍດີ ໄດ້ແກ່: ການແຕ່ງພື້ນຜິວ, ການແຕ້ມແຕ່ງເສັ້ນລວດລາຍ, ການຈ້ຳດອກດວງຕະຫຼອດຮອດການບາກແບ່ງລາຍໄດ້ຢ່າງຄ່ອງແຄ້ວ ເຊິ່ງເຮັດໃຫ້ຜົນງານທີ່ສ້າງສັນເກີດມີລັກສະນະສະເພາະຂອງແຕ່ລະຄົນໄດ້ຢ່າງເໝາະສົມ. ຄຽງຄູ່ກັນນັ້ນ, ກໍອາດມາຈາກການເລືອກໃຊ້ວັດສະດຸປະເພດດິນໜຽວມາສ້າງສັນຜົນງານ ຈຶ່ງສາມາດປະດັບຕົກແຕ່ງໄດ້ສະດວກ ແລະ ງ່າຍໃນການສ້າງຮ່ອງຮອຍທີ່ວິຈິດງົດງາມຂຶ້ນໃນຜົນງານອີກດ້ວຍ.

ດັ່ງນັ້ນ, ການສ້າງຊຸດການສອນແບບເສີມທັກສະການປັ້ນລາຍກະຈັງຕາອ້ອຍ ຂອງນັກສຶກສາລະດັບປະລິນຍາຕີ ວິທະຍາໄລສິລະປະສຶກສາ ນີ້ຈຶ່ງເປັນການສົ່ງເສີມ ແລະ ພັດທະນາທັກສະທາງດ້ານການປັ້ນລວດລາຍລາວໃຫ້ຖືກຕາມຫຼັກຂອງວິຊາ ແລະ ເກີດມີຄວາມຄ່ອງແຄ້ວໃຫ້ຫຼາຍຂຶ້ນ. ຄຽງຄູ່ກັນນັ້ນ, ກໍເພື່ອພັດທະນາດ້ານສື່ ແລະ ການຈັດກິດຈະກຳການຮຽນ-ການສອນໃຫ້ມີປະສິດທິພາບສູງຂຶ້ນ. ນອກຈາກນີ້, ຍັງໃຫ້ຜູ້ຮຽນມີໂອກາດໄດ້ຮຽນຮູ້ພື້ນຖານທາງດ້ານທິດສະດີ, ທັກສະ, ຂັ້ນຕອນ ແລະ ວິທີທາງຂະບວນການປັ້ນ ໂດຍການພັດທະນາໃຫ້ມີເນື້ອໃນເປັນຂັ້ນຕອນລຳດັບຂອງການຮຽນຮູ້, ຄວາມສະດວກ ແລະ ງ່າຍຕໍ່ຄວາມເຂົ້າໃຈ, ຄວາມສາມາດ, ສຶກສາ ແລະ ທົບທວນໄດ້ດ້ວຍຕົນເອງ ເຊິ່ງເປັນປະໂຫຍດຕໍ່ການສຶກສາ ແລະ ຍັງເປັນການຕໍ່ຍອດທາງດ້ານສິລະປະ-ວັດທະນະທຳຂອງຊາດໄດ້ໃນອີກຮູບແບບໜຶ່ງດ້ວຍ.

**ຕາງຕະລາງທີ 1:** ສະແດງຕົວຢ່າງຜົນການປັ້ນລາຍກະຈັງຕາອ້ອຍຂອງນັກສຶກສາ ກ່ອນ ແລະ ຫຼັງການໃຊ້ຊຸດການສອນແບບຝຶກເສີມທັກສະ ແຕ່ເກຣດ C ຫາ ເກຣດ A.

| ແທນຈຳນວນນັກສຶກສາ | ກ່ອນ | | | | ຫຼັງ | | | | ຄ່າປ່ຽນແປງ (ຄະແນນ) | ແປຜົນ |
|---|---|---|---|---|---|---|---|---|---|---|
| | ຮູບຜົນງານ | ຄະແນນ | ເກຣດ | ແປຜົນ | ຮູບຜົນງານ | ຄະແນນ | ເກຣດ | ແປຜົນ | | |
| **1** |  | 75 | B | ດີ |  | 94 | A | ດີເລີດ | +19 | **ເພີ່ມຂຶ້ນ** |
| 2 |  | 76 | B | ດີ |  | 84 | B+ | ດີຫຼາຍ | +8 | **ເພີ່ມຂຶ້ນ** |
| 3 |  | 65 | C | ພໍໃຊ້ |  | 77 | B | ດີ | +12 | **ເພີ່ມຂຶ້ນ** |
| 4 |  | 66 | C | ພໍໃຊ້ |  | 74 | C+ | ປານກາງ | +8 | **ເພີ່ມຂຶ້ນ** |

ຈາກຕາຕະລາງທີ 1 ຜົນການປະເມີນດ້ານທັກສະການປັ້ນລາຍກະຈັງຕາອ້ອຍຂອງນັກສຶກສາ ເຫັນວ່າ ຫຼັງການປັ້ນນັກສຶກສາສາມາດປະຕິບັດໄດ້ດີຂຶ້ນເປັນລຳດັບ. ເມື່ອພິຈາລະນາເປັນບຸກຄົນພົບວ່າ ຜູ້ທີ 1 ຫຼັງການປັ້ນປະຕິບັດໄດ້ 94 ຄະແນນ ໝາຍເຖິງດີເລີດ (A) ມີຄ່າປ່ຽນແປງເພີ່ມຂຶ້ນ +19 ຄະແນນ, ຜູ້ທີ 2 ຫຼັງການປັ້ນປະຕິບັດໄດ້ 84 ຄະແນນ ໝາຍເຖິງດີຫຼາຍ (B+) ມີຄ່າປ່ຽນແປງເພີ່ມຂຶ້ນ +8 ຄະແນນ, ຜູ້ທີ 3 ຫຼັງການປັ້ນປະຕິບັດໄດ້ 71 ຄະແນນ ໝາຍເຖິງດີ (B) ມີຄ່າປ່ຽນແປງເພີ່ມຂຶ້ນ +12 ຄະແນນ ແລະ ຜູ້ທີ 4 ຫຼັງການປັ້ນປະຕິບັດໄດ້ 74 ຄະແນນ ໝາຍເຖິງປານກາງ (C+) ມີຄ່າປ່ຽນແປງເພີ່ມຂຶ້ນ +8 ຄະແນນ.

## 5. ອະພິປາຍຜົນ

ຈາກຜົນການຄົ້ນຄວ້າ ປະເມີນການພັດທະນາທັກສະການປັ້ນລາຍກະຈັງຕາອ້ອຍຂອງນັກສຶກສາລະດັບປະລິນຍາຕີ ວິທະຍາໄລສິລະປະສຶກສາ ຜ່ານການນຳໃຊ້ຊຸດການສອນແບບຝຶກເສີມທັກສະ ພົບວ່າ ນັກສຶກສາມີຜົນສຳເລັດທາງທັກສະການປັ້ນລາຍກະຈັງຕາອ້ອຍສູງກວ່າກ່ອນນຳໃຊ້ ເຊິ່ງມີຄ່າປ່ຽນແປງທາງດ້ານທັກສະການປັ້ນເພີ່ມຂຶ້ນ ຄິດເປັນສ່ວນຮ້ອຍເທົ່າກັບ 87.40% ເຊິ່ງມີຄ່າປ່ຽນແປງເທົ່າກັບ 10.08%. ເນື່ອງຈາກເນື້ອໃນຂອງແບບຝຶກເສີມທັກສະເປັນຄວາມຮູ້ທີ່ນັກສຶກສາບໍ່ເຄີຍຮຽນມາກ່ອນ ຜູ້ຄົ້ນຄວ້າຈຶ່ງມຸ່ງເນັ້ນໃນເລື່ອງຄວາມຖືກຕ້ອງ, ໂຄງສ້າງ, ອົງປະກອບສ່ວນຍ່ອຍ, ສັດສ່ວນ, ການບາກລາຍ ແລະ ການແຕ້ມແຕ່ງລາຍເປັນຫຼັກ. ໂດຍຜູ້ຮຽນສາມາດຝຶກປະຕິບັດໄດ້ຕາມ

ຊຸດການສອນແບບຝຶກເສີມທັກສະໄດ້ດ້ວຍຕົນເອງໄດ້, ປະກອບກັບເນື້ອໃນຍັງມີຮູບພາບປະກອບ, ການອະທິບາຍດ້ານຫຼັກການ, ຂັ້ນຕອນ ແລະ ວິທີການປັ້ນທີ່ເຂົ້າໃຈງ່າຍ, ຈາກງ່າຍໄປຫາຍາກ ແລະ ເນັ້ນການປະຕິບັດຫຼາຍໆເທື່ອ ຈິ່ງເກີດມີຄວາມຄ່ອງແຄ້ວ. ຄຽງຄູ່ກັນນັ້ນ, ກໍສາມາດສົ່ງເສີມໃຫ້ຜູ້ຮຽນມີຄຸນຄ່າທາງດ້ານຈິດໃຈ, ຊາບຊຶ້ງໃນຄຸນຄ່າທາງດ້ານສິລະປະ-ວັດທະນະທຳຂອງຊາດ ແລະ ມີຄວາມເຂົ້າໃຈໃນຄວາມຮູ້ພື້ນຖານທາງດ້ານລາຍກະຈັງ ຕັ້ງແຕ່ຂັ້ນພື້ນຖານດ້ານສ່ວນປະກອບຂອງເສັ້ນ, ໂຄງສ້າງ, ສ່ວນປະກອບຂອງລາຍ, ຮູບຊົງ ແລະ ສັດສ່ວນຂອງລາຍ ຈາກພາກທິດສະດີຈຶ່ງສາມາດນຳໄປສູ່ຂະບວນການສະແດງອອກໃນຜົນງານປະຕິບັດຕົວຈິງທາງດ້ານຫຼັກການຂອງການປັ້ນລາຍ, ເຊິ່ງນັກສຶກສາສາມາດປັ້ນລາຍໄດ້ຕາມລັກສະນະ ແລະ ເນື້ອໃນກ່ຽວກັບສິ່ງທີ່ປັ້ນຕາມຮູບແບບທີ່ໄດ້ກຳນົດໄວ້. ເຊິ່ງຜົນການຄົ້ນຄວ້າໄດ້ສອດຄ່ອງກັບແນວຄິດຂອງ ກຸສະຍາ ແສງເດດ (2545, ໜ້າ. 7) ໄດ້ໃຫ້ຄວາມເຫັນວ່າ ແບບຝຶກທີ່ດີຄວນຕອບສະໜອງຄວາມແຕກຕ່າງລະຫວ່າງບຸກຄົນ ຜູ້ຮຽນແຕ່ລະຄົນມີຄວາມແຕກຕ່າງກັນໃນຫຼາຍໆດ້ານ ເຊັ່ນ: ຄວາມຕ້ອງການ, ຄວາມສົນໃຈ, ຄວາມພ້ອມ, ລະດັບສະຕິປັນຍາ ແລະ ປະສົບການເປັນຕົ້ນ. ສະນັ້ນ, ການເຮັດແບບຝຶກແຕ່ລະເລື່ອງຄວນຈັດເຮັດໃຫ້ຫຼາຍ ແລະ ມີທຸກລະດັບຕັ້ງແຕ່ງ່າຍ, ປານກາງ ຈົນຮອດລະດັບຄ່ອນຂ້າງຍາກ ເພື່ອນັກຮຽນເກັ່ງ, ປານກາງ ແລະ ອ່ອນ ຈະໄດ້ເລືອກເຮັດໄດ້ຕາມຄວາມສາມາດຂອງຕົນ. ທັງນີ້, ກໍເພື່ອໃຫ້ນັກຮຽນທຸກຄົນໄດ້ປະສົບຄວາມສຳເລັດໃນການເຮັດແບບຝຶກ. ສອດຄ່ອງກັບ ວຽງທອນ ທຸມມະຈັນ ພ້ອມຄະນະ (2019) ຜົນການຄົ້ນຄວ້າ ພົບວ່າ ຫຼັງການໃຊ້ຊຸດການຮຽນ-ການສອນແຕ້ມລາຍກະຈັງຕາອ້ອຍ ຄົ້ນພົບວ່າ ຜົນການຮຽນຂອງນັກສຶກສາແຕ້ມລາຍລາວດອກກະຈັງຕາອ້ອຍ ຫຼັງການຮຽນ ($\overline{X}$ = 3.11) ຄິດເປັນຄ່າສ່ວນຮ້ອຍເທົ່າກັບ 77.91%, ເຊິ່ງມີຄ່າປ່ຽນແປງເພີ່ມຂຶ້ນ ($\overline{X}$ = 1.14) ຄິດເປັນສ່ວນຮ້ອຍເທົ່າກັບ 28.66%. ເພາະວ່າເນື້ອໃນບົດຮຽນມີຂັ້ນຕອນ, ມີຮູບປະກອບ, ທິດສະດີ, ມີແບບທົດສອບກ່ອນ ແລະ ຫຼັງຮຽນ, ມີເກນການປະເມີນລະອຽດ ແລະ ແບບຢ່າງທີ່ມີຄຳແນະນຳຊີ້ແຈງຢ່າງລະອຽດ ເຮັດໃຫ້ຄູສອນໄດ້ນຳສະເໜີ ຫຼື ອະທິບາຍໜ້ອຍລົງ ແລະ ນັກສຶກສາມີຄວາມສົນໃຈ, ເອົາໃຈໃສ່ຕໍ່ການແຕ້ມລາຍດອກກະຈັງຕາອ້ອຍ. ນອກຈາກນີ້, ຍັງສາມາດແຕ້ມດ້ວຍຕົນເອງອີກ ເພາະໃນຊຸດການສອນມີຂັ້ນຕອນແຕ້ມລະອຽດ. ເຊິ່ງ ຄຳສຸກ ໄຊຍະວົງສີ ພ້ອມຄະນະ (2021) ໄດ້ປະເມີນທັກສະກ່ອນ ແລະ ຫຼັງການສອນແຕ້ມປະດັບປະດາລາຍດອກກາບຕາອ້ອຍ ຜົນຄົ້ນຄວ້າພົບວ່າ ຫຼັງການປະເມີນຜົນການຮຽນ ນັກຮຽນມີພັດທະນາການດ້ານທັກສະເພີ່ມຂຶ້ນຕາມລຳດັບ ຄື: 1) ດ້ານຄວາມຖືກຕ້ອງຂອງຂະໜາດ: ມີຄວາມເຂົ້າໃຈພື້ນຖານການແຕ້ມຮູບປະດັບປະດາ ເຊັ່ນ: ຂະໜາດ, ຄວາມຄົມຂອງເສັ້ນ ແລະ ຄວາມສົມບູນຂອງຜົນງານ, 2) ດ້ານການຈັດພາບ: ມີຄວາມເຂົ້າໃຈພື້ນຖານການຈັດອົງປະກອບຂອງລາຍ ເຊັ່ນ: ການວາງຂະໜາດ, ໜ້າເຈ້ຍ, ດອກລາຍ, ການເນັ້ນກາບດອກ, ແສງ-ເງົາ, 3) ດ້ານການບາກລາຍ: ມີຄວາມເຂົ້າໃຈການບາກລາຍແບບຕ່າງໆໄດ້ຢ່າງສວຍງາມ, 4) ດ້ານການຕັດເສັ້ນ: ມີຄວາມພາກພຽນໃນການຕັດເສັ້ນ ເຊິ່ງເປັນສ່ວນສຳຄັນທີ່ເຮັດໃຫ້ດອກລາຍມີການເນັ້ນຄວາມຄົມ ແລະ ນ້ຳໜັກຂອງເສັ້ນໄດ້ດີ ຕາມຫຼັກການຂອງການແຕ້ມລາຍ ເຮັດໃຫ້ດອກລາຍເກີດມີຄວາມອ່ອນຊ້ອຍ ແລະ ສວຍງາມ ແລະ 5) ດ້ານສີສັນ: ມີພື້ນຖານການຈັດລະບຽບສີ, ແສງ-ເງົາໄດ້ດີ. ສາມາດໃຊ້ໂທນສີຕ່າງໆມາປະດັບປະດາໃຫ້ມີໄລຍະນ້ຳໜັກຂອງສີ ເຊັ່ນ: ຄວາມເຂັ້ມ, ອ່ອນ-ແກ່ ເພື່ອສະແດງໃຫ້ເກີດມີເຕັກນິກສະເພາະດ້ານການປະດັບປະດາດອກລາຍຂັ້ນພື້ນຖານ. ສອດຄ່ອງກັບ ວິລະສັກ ຈັນທິລາດ (2022) ໄດ້ສຶກສາຜົນການຮຽນຫຼັງການໃຊ້ຊຸດການສອນແກະສະຫຼັກລາຍພື້ນຖານ (ລາຍກະຈັງຕາອ້ອຍ ແລະ ລາຍກັນດົກ 3ໂຕ) ສຳລັບນັກສຶກສາລະດັບປະລິນຍາຕີ ປີທີ 3 ວິທະຍາໄລສິລະປະສຶກສາ. ຜົນການຄົ້ນຄວ້າພົບວ່າ ປະສິດທິພາບຊຸດການສອນລາຍພື້ນຖານ (ກະຈັງຕາອ້ອຍ ແລະ ກັນດົກ 3 ໂຕ) E1/E2 = 77.15/81.30 ສູງກວ່າເກນທີ່ຕັ້ງໄວ້ ຄື: 75/75. ຈາກການປະເມີນຜົນງານລາຍກະຈັງຕາອ້ອຍ ກ່ອນຮຽນມີຄ່າສະເລ່ຍ ($\overline{X}$ = 62.30 ຄະແນນ) ຢູ່ໃນເກຣດ (D+) ໝາຍເຖິງອ່ອນ ແລະ ຫຼັງຮຽນມີຄ່າສະເລ່ຍ ($\overline{X}$ = 77.10 ຄະແນນ) ຢູ່ໃນເກຣດ (B) ໝາຍເຖິງດີ ແລະ ມີຄ່າປ່ຽນແປງເທົ່າກັບ 14.80 ຄະແນນ (P = 14.80%) ໝາຍເຖິງເພີ່ມຂຶ້ນ, ເມື່ອພິຈາລະນາຄ່າປ່ຽນແປງສ່ວນຮ້ອຍ ພົບວ່າ ຄ່າປ່ຽນແປງຫຼາຍທີ່ສຸດເທົ່າກັບ 40 ຄະແນນ (P = 40%) ໝາຍເຖິງເພີ່ມຂຶ້ນ, ຮອງລົງມາມີຄ່າປ່ຽນແປງເທົ່າກັບ 26 ຄະແນນ (P = 26%) ໝາຍເຖິງເພີ່ມຂຶ້ນ ແລະ ຄ່າປ່ຽນແປງໜ້ອຍທີ່ສຸດເທົ່າກັບ 0 ຄະແນນ (P = 0%) ໝາຍເຖິງຄົງທີ່.

ຈາກການປະເມີນຜົນງານລາຍກັນດົກ ກ່ອນຮຽນມີຄ່າສະເລ່ຍ ($\overline{X}$ = 64 ຄະແນນ) ຈັດຢູ່ໃນເກຣດ (D+) ໝາຍເຖິງອ່ອນ, ຄະແນນການປະເມີນຜົນງານລາຍກັນດົກ ຫຼັງຮຽນມີຄ່າສະເລ່ຍ ($\overline{X}$ = 81.30 ຄະແນນ) ຈັດຢູ່ໃນເກຣດ (B+) ໝາຍເຖິງດີຫຼາຍ ແລະ ມີຄ່າປ່ຽນແປງເທົ່າກັບ 21.30 ຄະແນນ ໝາຍເຖິງເພີ່ມຂຶ້ນ, ເມື່ອພິຈາລະນາຄ່າປ່ຽນແປງສ່ວນຮ້ອຍ ພົບວ່າ ຄ່າປ່ຽນແປງຫຼາຍທີ່ສຸດເທົ່າກັບ 34 ຄະແນນ (P = 34%) ໝາຍເຖິງເພີ່ມຂຶ້ນ, ຮອງລົງມາມີຄ່າປ່ຽນແປງເທົ່າກັບ 30 ຄະແນນ (P = 30%) ໝາຍເຖິງເພີ່ມຂຶ້ນ ແລະ ຄ່າປ່ຽນແປງໜ້ອຍທີ່ສຸດເທົ່າກັບ 0 ຄະແນນ (P = 0%) ໝາຍເຖິງຄົງທີ່ ແລະ ໄດ້ສອດຄ່ອງກັບ ປະສິດ ເອມທິມ (2551) ໄດ້ສຶກສາຜົນການໃຊ້ບົດຮຽນວີດີທັດທີ່ເນັ້ນການຝຶກທັກສະປະຕິບັດ ເລື່ອງການປັ້ນລວດລາຍໄທ ວິຊາທັດສະນະສິນ ກຸ່ມການຮຽນຮູ້ສິລະປະສຳລັບນັກຮຽນຊັ້ນ ປີທີ 3. ຜົນການຄົ້ນຄວ້າ ພົບວ່າ 1) ໄດ້ບົດຮຽນວີດີທັດທີ່ເນັ້ນການຝຶກທັກສະປະຕິບັດ ເລື່ອງການປັ້ນລວດລາຍໄທທີ່ມີຄຸນນະພາບດ້ານເນື້ອໃນຢູ່ໃນລະດັບດີຫຼາຍ ແລະ ມີຄຸນນະພາບດ້ານເຕັກໂນໂລຊີຢູ່ໃນລະດັບດີ ແລະ ມີປະສິດທິພາບ 86.23/87.33. 2) ນັກຮຽນທີ່ຮຽນຈາກບົດຮຽນວີດີທັດ ເລື່ອງການປັ້ນລວດລາຍໄທກັບການຮຽນຕາມແຜນການຈັດການຮຽນຂອງຄູ ມີຜົນທັກສະການປະຕິບັດການປັ້ນລວດລາຍໄທແຕກຕ່າງກັນເຊິ່ງມີໄນສຳຄັນທາງສະຖິຕິທີ່ລະດັບ 0.05. 3) ນັກຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດຕໍ່ການຮຽນຈາກບົດຮຽນວີດີທັດປະຕິບັດ ເລື່ອງການປັ້ນລວດລາຍໄທ.

ການເສີມສ້າງທັກສະການປັ້ນລາຍກະຈັງຕາອ້ອຍສຳລັບນັກສຶກສາລະດັບປະລິນຍາຕີ ວິທະຍາໄລສິລະປະສຶກສາ ຜ່ານຊຸດການສອນແບບຝຶກເສີມທັກສະ ນີ້ຈຶ່ງເປັນການສົ່ງເສີມ ແລະ ພັດທະນາທັກສະດ້ານການປັ້ນລວດລາຍລາວໃຫ້ຖືກຕາມຫຼັກວິຊາ ແລະ ເກີດຄວາມຄ່ອງແຄ້ວໃຫ້ຫຼາຍຂຶ້ນ. ແຕ່ການສອນທີ່ດີນັ້ນຕ້ອງມີການອອກແບບຢ່າງດີ, ຄຳນຶງເຖິງຄວາມແຕກຕ່າງລະຫວ່າງບຸກຄົນ, ເນັ້ນການປະຕິບັດຕົວຈິງ ຈຶ່ງຈະສາມາດພັດທະນາທັກສະດ້ານສິລະປະຂອງຜູ້ຮຽນໄດ້ຢ່າງມີປະສິດທິຜົນ. ຄຽງຄູ່ກັນນັ້ນ, ກໍເພື່ອພັດທະນາດ້ານສື່ ແລະ ການຈັດກິດຈະກຳການຮຽນ-ການສອນໃຫ້ມີປະສິດທິພາບສູງຂຶ້ນ. ນອກຈາກນີ້, ຜູ້ຮຽນຍັງມີໂອກາດໄດ້ຮຽນຮູ້ພື້ນຖານດ້ານທິດສະດີ, ທັກສະ, ຂັ້ນຕອນ ແລະ ວິທີທາງຂະບວນການປັ້ນ ໂດຍງ່າຍຕໍ່ຄວາມເຂົ້າໃຈ, ຄວາມສາມາດ, ສຶກສາ, ທົບທວນໄດ້ດ້ວຍຕົນເອງ ແລະ ຍັງເປັນການຕໍ່ຍອດທາງດ້ານສິລະປະ-ວັດທະນະທຳຂອງຊາດໃນຕໍ່ໜ້າ.

## 6. ສະຫຼຸບຜົນ

ຜົນການເສີມສ້າງທັກສະການປັ້ນລາຍກະຈັງຕາອ້ອຍຂອງນັກສຶກສາລະດັບປະລິນຍາຕີ ວິທະຍາໄລສິລະປະສຶກສາຜ່ານການໃຊ້ຊຸດການສອນແບບຝຶກເສີມທັກສະ ແລະ ວິທີການສອນທີ່ໃຊ້ໃນການເສີມສ້າງທັກສະການປັ້ນລາຍກະຈັງຕາອ້ອຍແມ່ນຢູ່ໃນລະດັບຄວາມເໝາະສົມຫຼາຍທີ່ສຸດ ($\bar{X}$=4.50, S.D.=0.06) ເນື່ອງຈາກເປັນການພັດທະນາສື່ການຮຽນ-ການສອນ ເພື່ອຊ່ວຍແກ້ບັນຫາຂອງນັກສຶກສາທີ່ກົງເປົ້າໝາຍໃນດ້ານຄວາມເຂົ້າໃຈ ແລະ ທັກສະພື້ນຖານຂອງການຮຽນປັ້ນລວດລາຍກະຈັງຕາອ້ອຍ. ເຊິ່ງເປັນສ່ວນຊ່ວຍໃນການສຶກສາໃຫ້ເກີດຄວາມເຂົ້າໃຈງ່າຍ. ໂດຍການສ້າງໃຫ້ມີເນື້ອໃນເປັນສ່ວນຍ່ອຍຕາມລຳດັບການຮຽນຮູ້ຕາມຫຼັກການທາງດ້ານສິລະປະກຳ, ສະດວກ ແລະ ງ່າຍຕໍ່ຄວາມເຂົ້າໃຈ, ປະຕິບັດ, ສຶກສາ ແລະ ທົບທວນໄດ້ດ້ວຍຕົນເອງ ໂດຍສະເພາະແມ່ນດ້ານຄວາມຖືກຕ້ອງ, ໂຄງສ້າງ, ອົງປະກອບສ່ວນຍ່ອຍ, ສັດສ່ວນ, ການບາກລາຍ ແລະ ການແຕ້ມແຕ່ງລາຍ ແລະ ຈາກຜົນການສຶກສາຄວາມຄິດເຫັນຂອງນັກສຶກສາຕໍ່ດ້ານເນື້ອໃນ ແລະ ສ່ວນປະກອບໂຄງສ້າງຂອງຊຸດການສອນແບບຝຶກເສີມທັກສະ ພົບວ່າ ຢູ່ໃນລະດັບຄວາມເໝາະສົມຫຼາຍທີ່ສຸດ ($\bar{X}$=4.50, S.D.= 0.22), ສ່ວນດ້ານຈຸດປະສົງຂອງຊຸດແບບຝຶກເສີມທັກສະ ໂດຍລວມນັກສຶກສາມີຄວາມພໍໃຈຢູ່ໃນລະດັບທີ່ມີຄວາມເໝາະສົມຫຼາຍ ($\bar{X}$=4.49, S.D.= 0.04) ເຊິ່ງເປັນປະໂຫຍດຕໍ່ການພັດທະນາການສຶກສາ ແລະ ສາມາດສົ່ງເສີມໃຫ້ຜູ້ຮຽນເຫັນຄຸນຄ່າໃນສິລະປະກຳລາວ ແລະ ສາມາດພັດທະນາຕໍ່ຍອດສິລະປະ-ວັດທະນະທຳຂອງຊາດໄດ້ອີກຮູບແບບໜຶ່ງ.

## 7. ຂໍ້ຈຳກັດ ແລະ ຂໍ້ສະເໜີແນະ

### *7.1 ຂໍ້ຈຳກັດຂອງການຄົ້ນຄ້ວາ*

ການວິໄຈຄັ້ງນີ້ມີຄວາມຫຍຸ້ງຍາກຫຼາຍດ້ານ ເປັນຕົ້ນແມ່ນຂໍ້ມູນພາກເອກະສານ, ຕຳລາ, ງານວິໄຈທີ່ກ່ຽວຂ້ອງ ເຊິ່ງເປັນແຫຼ່ງຂໍ້ມູນພື້ນຖານໜຶ່ງທີ່ຈະຊ່ວຍສະໜັບສະໜູນໃຫ້ກັບການຄົ້ນຄວ້າຄັ້ງນີ້ ແມ່ນຍັງຂາດ ແລະ ບໍ່ພຽງພໍ ຈຶ່ງເຮັດໃຫ້ການເກັບຮວບຮວມຂໍ້ມູນດ້ານເນື້ອໃນມາປະກອບການຄົ້ນຄວ້າບໍ່ໄດ້ຄົບຖ້ວນຕາມຈຸດປະສົງເທົ່າທີ່ຄວນ ໂດຍສະເພາະແມ່ນຈະຕ້ອງເພີ່ມກຸ່ມເປົ້າໝາຍການສຳພາດຜູ້ໃຫ້ຂໍ້ມູນທາງດ້ານສິລະປະລາຍລາວຫຼາຍຂຶ້ນ ຈຶ່ງຈະເຮັດໃຫ້ເນື້ອໃນທີ່ນຳມາປະກອບກັບການຄົ້ນຄວ້າມີປະສິດທິຜົນສູງຂຶ້ນ.

### *7.2 ຂໍ້ສະເໜີແນະໃນການນຳຜົນການຄົ້ນຄ້ວາໄປໃຊ້*

- ຜົນ ແລະ ຂໍ້ມູນຂອງການຄົ້ນຄວ້ານີ້ ເປັນຂໍ້ມູນພື້ນຖານທາງການສຶກສາ ສາມາດນຳໄປໃຊ້ເຂົ້າໃນຫຼັກສູດ ແລະ ເອກະສານການຮຽນ-ການສອນປັ້ນ ພາຍໃນວິທະຍາໄລສິລະປະສຶກສາ ເພື່ອຝຶກເສີມທັກສະຂັ້ນພື້ນຖານຂອງນັກສຶກສາລະດັບປະລິນຍາຕີ ຫຼື ອື່ນໆທີ່ກ່ຽວຂ້ອງ ໂດຍໃຫ້ຜູ້ຮຽນໄດ້ປະຕິບັດຖືກຕາມຮູບແບບຂອງລາຍກະຈັງຕາອ້ອຍ ແລະ ຫຼັກການວິຊາ. ພ້ອມກັນນັ້ນ, ກໍຕ້ອງສຶກສາຄົ້ນຄວ້າຂໍ້ມູນຈາກແຫຼ່ງອື່ນໆ ເພີ່ມຕື່ມເພື່ອໃຫ້ໄດ້ຂໍ້ມູນທີ່ກ່ຽວຂ້ອງມີຄວາມລະອຽດ ແລະ ຊັດເຈນຂຶ້ນ. ທັງນີ້, ກໍເພື່ອເຮັດໃຫ້ການຈັດກິດຈະກຳການຮຽນ-ການສອນນັ້ນສອດຄ່ອງກັບວິທີການສອນຂອງຕົນເອງໄດ້ຢ່າງມີປະສິດທິຜົນ.
- ຄວນຂະຫຍາຍຊຸດການສອນແບບຝຶກເສີມທັກສະ ແລະ ສື່ການຮຽນ-ການສອນປັ້ນລາຍກະຈັງຕາອ້ອຍໃຫ້ຜູ້ຮຽນໃນລະດັບສາມັນສຶກສາໄດ້ຮຽນຮູ້ ເພື່ອເປັນພື້ນຖານຂອງການສຶກສາໃນລະດັບຕໍ່ໄປ.

## 8. ເອກະສານອ້າງອີງ

ກະຊວງສຶກສາທິການ ແລະ ກິລາ. (2014). *ຄູ່ມືແນະນຳວິທີສິດສອນ.* ໂດຍການສະໜັບ-ສະໜູນຈາກທະນາຄານ ADB.

ກົມພະລະ ແລະ ສິລະປະສຶກສາ ກະຊວງສຶກສາທິການ ແລະ ກິລາ. (2018*). ປຶ້ມຄູ່ມືຝຶກອົບຮົມ ວິຊາສິລະປະກຳໂຮງຮຽນມັດທະຍົມສຶກສາ 45 ແຫ່ງ ພາຍໃຕ້ໂຄງການ SESDP ADB Grant No: 0257. Lao (sf)*.

ກຸສະຍາ ແສງເດດ. (2545*). ແບບຝຶກຄູ່ມືພັດທະນາສື່ການຮຽນ-ການສອນທີ່ເນັ້ນຜູ້ຮຽນເປັນສຳຄັນ ລະດັບປະຖົມສຶກສາ.* ກຸງເທບມະຫານະຄອນ, ບໍລິສັດສຳນັກພິມແມັກ ຈຳກັດ.

ຄຳສຸກ ໄຊຍະວົງສີ ພ້ອມຄະນະ. (2020). *ການປະເມີນທັກສະກ່ອນ ແລະ ຫຼັງການສອນແຕ້ມປະດັບປະດາລາຍດອກກາບຕາອ້ອຍຂອງນັກຮຽນຫ້ອງ ມ.4/1 ໂຮງຮຽນມັດທະຍົມຕອນຕົ້ນທົ່ງນາມີ ເມືອງປາກກະດິງ ແຂວງບໍລິຄຳໄຊ.*

ສີຈ່ອຍ ຍາດວິເກດ ພ້ອມຄະນະ. (2018). *ການປະເມີນຫຼັກສູດສ້າງຄູມັດທະຍົມລະດັບປະລິນຍາຕີ ລະບົບ 12+4 (ສາຍວິຊາຄູສິລະປະສຶກສາ) ທີ່ ວິທະຍາໄລສິລະປະສຶກສາ ສປປ ລາວ.*

ທິດຕັນ. (ບໍ່ລະບຸປີພິມ). *ສິລະປະລາຍລາວຫຼວງພະບາງ ເຫຼັ້ມ 1.* ພິມທີ່: ໂຮງພິມກະຊວງສຶກສາ.

ທັດຖະບໍດິນ ບຸນເນື່ອງ. (2560). *ການພັດທະນາແບບຝຶກການແຕ້ມລວດລາຍກັນດົກ ສຳລັບນັກສຶກສາສິລະປະລະດັບປະລິນຍາຕີ.* ວິທະຍານິພົນການສຶກສາຕາມຫຼັກສູດປະລິນຍາຄະລຸສາດມະຫາບັນດິດ ສາຂາວິຊາສິລະປະສຶກສາ, ພາກວິຊາສິລະປະ ດົນຕີ ແລະ ນາຕະສິນສຶກສາ, ຄະນະຄະລຸສາດ ຈຸລາລົງກອນມະຫາວິທະຍາໄລ.

ບຸນທ່ຽງ ສິຣິປະພັນ. (13 ກໍລະກົດ 2021, ສຳພາດ). *ຄວາມຄິດເຫັນກ່ຽວກັບລວດລາຍລາວ, ບົດບາດຂອງລາຍກະຈັງ ແລະ ບົດບາດຂອງການປັ້ນ.* ທີ່: ສະຖາບັນວິຈິດສິນແຫ່ງຊາດ, ບ້ານ ໂພນປ່າເປົ້າ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ.

ບຸນແສງ ທຽບພິງພັນ. (04 ມິຖຸນາ 2021, ສຳພາດ). *ຄວາມຄິດເຫັນກ່ຽວກັບລວດລາຍລາວ, ບົດບາດຂອງລາຍກະຈັງ ແລະ ບົດບາດຂອງການປັ້ນ.* ທີ່: ບ້ານ ໂພນທັນ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ.

ບຸນເລີງ ເວີ່ນວິລາວົງ. (12 ເມສາ 2021, ສຳພາດ). *ຄວາມຄິດເຫັນກ່ຽວກັບລວດລາຍລາວ, ບົດບາດຂອງລາຍກະຈັງ ແລະ ບົດບາດຂອງການປັ້ນ.* ທີ່: ບໍລິສັດຜະລິດຕະພັນວັດທະນະທຳ, ບ້ານ ຈອມມະນີ, ເມືອງ ໄຊເຊດຖາ, ນະຄອນຫຼວງວຽງຈັນ.

ປະສິດ ເອມທິມ. (2551). *ຜົນການໃຊ້ບົດຮຽນວີດີທັດທີ່ເນັ້ນການຝຶກທັກສະປະຕິບັດ ເລື່ອງການປັ້ນລວດລາຍໄທ ວິຊາທັດສະນະສິນ ກຸ່ມການຮຽນຮູ້ສິລະປະສຳລັບນັກຮຽນຊັ້ນ ປີທີ 3.* ປະລິນຍານິພົນ ກສ.ມ. (ເຕັກໂນໂລຊີສຶກສາ). ກຸງເທບ: ບັນດິດວິທະຍາໄລ ມະຫາວິທະຍາໄລສີນະຄະລິນວິໂລດ.

ວິສິດ ຈິງແຈ່ມ. (2552). *ການພັດທະນາຊຸດຝຶກທັກສະການແຕ້ມລວດລາຍໄທພື້ນຖານ ສຳລັບນັກຮຽນລະດັບຊັ້ນ ມ.4.* ວິທະຍານິພົນການສຶກສາຕາມຫຼັກສູດປະລິນຍາສຶກສາສາດມະຫາບັນດິດ ສາຂາວິຊາເຕັກໂນໂລຊີການສຶກສາ, ພາກວິຊາເຕັກໂນໂລຊີການສຶກສາ ບັນດິດວິທະຍາໄລ ມະຫາວິທະຍາໄລສິລະປາກອນ.

ວິລະສັກ ຈັນທິລາດ. (2022). *ສຶກສາຜົນການຮຽນຫຼັງການໃຊ້ຊຸດການສອນແກະສະຫຼັກລາຍພື້ນຖານ (ລາຍກະຈັງຕາອ້ອຍ ແລະ ລາຍກັນດົກ 3 ໂຕ) ສຳລັບນັກສຶກສາລະດັບປະລິນຍາຕີ ປີທີ 3 ວິທະຍາໄລສິລະປະສຶກສາ.*

ວຽງທອນ ທຸມມະຈັນ ພ້ອມຄະນະ. (2019). *ສຶກສາການສ້າງຊຸດການຮຽນ-ການສອນແຕ້ມລາຍລາວດອກກະຈັງຕາອ້ອຍ ສຳລັບນັກສຶກສາລະດັບປະລິຍາຕີ ປີ 1 ສົກຮຽນ 2018-2019 ວິທະຍາໄລສິລະປະສຶກສາ.*